# ບົດສະຫລຸບການຄົ້ນຄ້ວາ

# ການປະເມີນຜົນທາງດ້ານເສດຖະກິດ - ສັງຄົມ ແລະ ສິ່ງແວດລ້ອມ ຈາກໂຄງການ ປູກໄມ້ອຸດສະຫະກຳ ເປັນສິນຄ້າ ຢູ່ ສປປ ລາວ.

ໄລຍະເວລາຄົ້ນຄ້ວາ 01 ປີ ( ມິຖຸນາ 2007 - ພຶດສະພາ 2008 )



**ໂຄງການການຮ່ວມມື**

**ລະຫວ່າງ**

- ສູນຄົ້ນຄ້ວາ ແລະຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີ

**ກັບ**

- ຄະນະສັງຄົມສາດ, ມະຫາວິທະຍາໄລ ຊຽງໃໝ່, ປະເທດໄທ

**ແລະ**

- ມູນນິທິຟື້ນຟູຊີວິດ ແລະ ທຳມະຊາດ ກຸງເທບ, ປະເທດໄທ

ນະຄອນຫລວງວຽງຈັນ, ສິງຫາ 2009

# ບົດນຳ

ໂຄງການຄົ້ນຄ້ວາປະເມີນຜົນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຈາກໂຄງການປູກໄມ້ອຸດສະຫະກຳເປັນສິນຄ້ານີ້, ເປັນການຮ່ວມມືລະຫວ່າງ ສູນຄົ້ນຄ້ວາ ແລະຂໍ້ມູນຂ່າວສານທີ່ດິນ ແລະຊັບພະຍາກອນທຳມະຊາດ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີ ກັບມູນນິທິຟື້ນຟູຊີວິດ ແລະທຳມະຊາດ ກຸງເທບ ແລະຄະນະສັງຄົມສາດ, ມະຫາວິທະຍາໄລຊຽງໃໝ່ ປະເທດໄທ, ໂດຍປະຕິບັດຕາມຂໍ້ຕົກລົງແຕ່ງຕັ້ງ ຄະນະຮັບຜິດຊອບໂຄງການ ຂອງ ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ, ສະ ບັບເລກທີ 803/ ສນຍ.ອຄດຊ, ລົງວັນທີ 28 ກັນຍາ 2007, ວ່າດ້ວຍການແຕ່ງຕັ້ງພະ ນັກງານ,ລົງເຄື່ອນໄຫວເກັບກຳຂໍ້ມູນ ປະເມີນຜົນທາງດ້ານເສດຖະກິດ - ສັງຄົມ ແລະສິ່ງແວດລ້ອມ,ຈາກໂຄງການປູກໄມ້ອຸດສະຫະກຳເປັນສິນຄ້າ ຢູ່ແຂວງຈຳປາສັກ ແລະແຂວງສາລະວັນ.ເປົ້າໝາຍເພື່ອປະເມີນຜົນກະທົບ ທາງດ້ານເສດຖະກິດ - ສັງຄົມ ແລະສິ່ງແວດລ້ອມຈາກການສຳປະທານທີ່ດິນ ໃນພື້ນທີ່ ຂະໜາດ ກ້ວາງ. ເພື່ອປູກຢາງພາລາ. ພ້ອມກັບຂໍ້ສະເໜີໃນການຄຸ້ມຄອງທີ່ດິນ ແລະການນຳ ໃຊ້ທີ່ດິນ ຢູ່ ສປປ ລາວ ໃນອະນາຄົດ. ໂດຍໄດ້ເລືອກເອົາຈຸດການສຶກສາຄົ້ນຄ້ວາຢູ່ 2 ແຂວງພາກ ໃຕ້ ຂອງ ລາວຄື: ແຂວງຈຳປາສັກ ແລະແຂວງສາລະວັນ, ຊຶ່ງເລີ້ມຕົ້ນແຕ່ເດືອນກໍລະກົດ 2007 ເຖິງເດືອນ ກໍລະກົດ 2008, ເປັນໄລຍະເວລາ 01 ປີ.

**<u>ຈຸດປະສົງຂອງການຄົ້ນຄ້ວາ</u>**

1. ເພື່ອຊ່ວຍເຫຼືອ ແລະ ພັດທະນາຄວາມສາມາດໃນດ້ານການຄົ້ນຄ້ວາ ແລະ ສ້າງຖານຂໍ້ມູນຂ່າວສານກ່ຽວກັບການປູກໄມ້ເພື່ອການຄ້າໃນພື້ນທີ່ຂະໜາດໃນ ສປປ ລາວ
2. ເພື່ອສຶກສາ ແລະ ວິເຄາະຜົນການກະທົບທາງນິເວດວິທະຍາ ແລະ ເສດຖະກິດສັງຄົມຂອງການປູກຕົ້ນໄມ້ການຄ້າໃນພື້ນທີ່ຂະໜາດໃຫຍ່ໃນ ສປປ ລາວ ທັງໃນລະດັບທ້ອງຖິ່ນ, ລະດັບແຂວງ ແລະ ລະດັບຊາດ
3. ເພື່ອລິເລີ້ມ ແລະ ກະຕຸ້ນຄວາມຮ່ວມມືຜ່ານການຮ່ວມຄົ້ນຄ້ວາລະຫ່ວາງຝ່າຍຕ່າງໆ ຊຶ່ງໄດ້ແກ່ ໜ່ວຍງານລັດຖະບານຂອງ ສປປ ລາວ(CRILNR), ອົງການພັດທະນາເອກະຊົນ (FER ປະເທດໄທ ແລະ ອົງການພັດທະນາເອກະຊົນອື່ນໆ ໃນ ສປປ ລາວ) ແລະ ນັກວິຊາການ (ມະຫາວິທະຍາໄລຊຽງໃໝ່ ປະເທດໄທ ແລະ ນັກຄົ້ນຄ້ວາໃນ ສປປ ລາວ)
4. ເພື່ອສ້າງໂອກາດໃນການແລກປ່ຽນຮຽນຮູ້ລະຫວ່າງຝ່າຍຕ່າງໆ ທັງຜູ້ໄດ້ຮັບຜົນກະທົບ ແລະ ຜູ້ສົນໃຈປະເດັນການປູກໄມ້ເພື່ອການຄ້າໃນພື້ນທີ່ຂະໜາດໃຫຍ່ ຊຶ່ງປະກອບດ້ວຍ ເຈົ້າໜ້າທີ່ໃນໜ່ວຍງານຂອງລັດຖະບານໃນທຸກລະດັບ ອົງການພັດທະນາເອກະຊົນ, ຊາວບ້ານ, ນັກວິຊາການ ແລະ ຜູ້ແທນບໍລິສັດປູກກໄມ້

5. ເພື່ອໃຫ້ເກີດຄວາມຄິດເຫັນ ແລະ ຂໍ້ສະເໜີແນະສຳລັບການພັດທະນານະໂຍບາຍການນຳໃຊ້ທີ່ດິນໃນ ສປປ ລາວ

## ການຄົ້ນຄ້ວາໄດ້ແບ່ງອອກເປັນ 4 ພາກ ຄື:

### ພາກທີ1: ສປປ ລາວ ກັບການອຸດສາຫະກຳຢາງພາລາ.

ເນື້ອໃນໃນພາກນີ້, ເປັນການປະເມີນປະຫວັດສາດ ແລະ ການພັດທະນາ ຂອງການອຸດສາຫະກຳຢາງພາລາ,ໃນພູມີພາກແມ່ນ້ຳຂອງ ແລະການຂະຫຍາຍຕົວຂອງການລົງທຶນປູກຢາງພາລາຢູ່ ສປປ ລາວ.

### ພາກທີ 2 : ການສຳປະທານທີ່ດິນໃນ ສປປ ລາວ.

ເປັນການລວບລວມ ແລະທົບທວນຄືນກົດໝາຍ ແລະ ນະໂຍບາຍກ່ຽວກັບທີ່ດິນປ່າໄມ້ ແລະວິເຄາະເຖິງຂະບວນການອານຸມັດການສຳປະທານທີ່ດິນໃນ ສປປ ລາວ ໃນໄລຍະຜ່ານມາ.

### ພາກທີ 3: ອຸດສາຫະກຳ ຢາງພາລາ ໃນຊຸມຊົນ ແລະຮູບແບບການດຳລົງຊີວິດ ທີ່ປ່ຽນແປງ.

ເປັນການປະເມີນຜົນກະທົບ ທາງດ້ານເສດຖະກິດ - ສັງຄົມ ແລະສິ່ງແວດລ້ອມ ທີ່ມີຕໍ່ປະຊາຊົນໃດ້ອາໄສຢູ່ໃນເຂດພື້ນທີ່ຖືກໂຄງການຈຳນວນ 6 ບ້ານໄດ້ແກ່: ບ້ານອຸດົມສຸກ, ຫຼັກ19 ແລະ ໜອງນ້ຳຂາວໃຫຍ່, ເມືອງບາຈຽງ, ແຂວງຈຳປາສັກ. ບ້ານວັງຄະນານ, ບ້ານ ໜອງແກ ແລະ ບ້ານໜອງເລົາເທິງ, ເມືອງເລົ່າງາມ, ແຂວງສາລະວັນ. ການສຳພາດໄດ້ເຕົ້າໂຮມ ຫົວໜ້າ ຫລືຜູ້ ຕາງໜ້າຄອບຄົວໃນບ້ານນັ້ນ, ຄະນະຄົ້ນຄ້ວາ,ໄດ້ລວບລວມຂໍ້ມູນຍ້ອນຫຼັງກັບໄປ 5 ປີກ່ອນຄື: ຕັ້ງແຕ່ປີ 2003 ຫາປີ 2007, ທັງນີ້ ກໍເພື່ອສົມທຽບໃຫ້ເຫັນເຖິງຮູບແບບການດຳລົງຊີວິດ, ກ່ອນ ແລະ ຫຼັງການເຂົ້າມາ ຂອງອຸດສະຫະກຳປູກຢາງພາລາ, ຊຶ່ງເລີ່ມບຸກເບີກທີ່ດິນ ແລະປູກຢາງພາລາ ຕັ້ງແຕ່ທ້າຍປີ 2004.

### ພາກທີ 4: ສະຫລຸບຜົນ ຂອງການວິເຄາະ ແລະພາກສະເໜີ.

ພາກນີ້ເປັນບົດວິເຄາະ, ຊຶ່ງປະກອບດ້ວຍ ຂໍ້ຄົ້ນພົບຈາກການສຶກສາຄົ້ນຄ້ວາ ແລະ ຂໍ້ສະເໜີແຜນການແກ້ໄຂ, ປະກອບດ້ວຍ 3 ໄລຍະຄື: ໄລຍະສັ້ນ, ໄລຍະກາງ ແລະໄລຍະຍາວ. ທັງນີ້, ກໍເພື່ອແກ້ໄຂບັນຫາຄວາມທຸກຍາກ ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກການສູນເສຍທີ່ດິນ, ລວມເຖິງ ການຈັດຕັ້ງກົນໄກໃນການຕິດຕາມກວດກາ, ການດຳເນີນງານ ຂອງບໍລິສັດ ປູກຢາງພາລາ, ການໃຫ້ ຄວາມຊ່ວຍເຫຼືອເພື່ອແກ້ໄຂຊີວິດການກິນຢູ່ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ,

ສຶກສາກ່ຽວກັບທິດທາງແຜນການ ແລະນະໂຍບາຍ ຂອງລັດຖະບານ ທີ່ໃຫ້ການສຳປະທານທີ່ດິນ ແລະນະໂຍບາຍ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນ.

## ພາກທີ I: ສປປ ລາວກັບອຸດສາຫະກຳ ຢາງພາລາ

ການຂະຫຍາຍຕົວຂອງອຸດສາຫະກຳຢາງພາລາໃນ ສປປ ລາວ ພົວພັນໂດຍກົງກັບການເກີດຂຶ້ນ ແລະຂະຫຍາຍຕົວ ຂອງທຶນນິຍົມໃນອະນຸພູມີພາກແມ່ນ້ຳຂອງ(Mekong Sub-region) , ການຂະຫຍາຍຕົວຂອງທຶນນິຍົມຊາຍແດນ (Frontier capitalism) ໄດ້ກາຍເປັນຄຸນລັກສະນະທີ່ສຳຄັນ ຂອງອຸດສາຫະກຳຢາງພາລາ. ນັບແຕ່ປາຍທົດສະວັດ 1900 ເປັນຕົ້ນມາ. ທີ່ດຳເນີນໄປໄດ້ດ້ວຍຄວາມສຳພັນຫຼາກຫຼາຍຮູບແບບ. ລະຫວ່າງນັກລົງທຶນຕ່າງປະເທດ ກັບເຈົ້າໜ້າທີ່ລັດ ທີ່ຢູ່ຕາມຊາຍແດນຈີນ ແລະ ຫວຽດນາມ, ຈີນ ແລະ ພະມ້າ, ຈີນ ແລະ ລາວ, ໄທ ແລະ ລາວ, ຫວຽດນາມ ແລະ ລາວ.

ສປປ ລາວ ກາຍເປັນພື້ນທີ່ຍຸດທະສາດ,ໃນການປູກຢາງພາລາ ທີ່ມີນາຍທຶນຫຼາຍປະເທດມາລົງທຶນໃນຈຳນວນນັກລົງທຶນທີ່ຫຼາຍກ່ວາໝູ່ ໃນປັດຈຸບັນແມ່ນຈີນ, ຫວຽດນາມ ແລະ ໄທ ອັນເປັນຜົນສືບເນື່ອງຈາກຄວາມຕ້ອງການຢາງພາລາ ທຳມະຊາດ, ທີ່ສູງຂຶ້ນທົ່ວໂລກ ນັບແຕ່ປີ2005 ຕະຫຼອດຈົນການພັດທະນາເສດຖະກິດໃນ ພູມີພາກແມ່ນ້ຳຂອງ ໂດຍສະເພາະຈີນ ຊຶ່ງປະຈຸບັນກາຍເປັນຜູ້ນຳເຂົ້າຢາງພາລາລາຍໃຫຍ່ທີ່ສຸດໃນໂລກ. ຄວາມຕ້ອງການຢາງພາລາ ທຳມະ ຊາດທີ່ສູງຂຶ້ນຢ່າງຕໍ່ເນື່ອງມາຕະຫຼອດຊ່ວງທົດສະວັດທີ່ຜ່ານມາເຮັດໃຫ້ນັກລົງທຶນຫຼາຍ ປະເທດທັງຈີນ , ຫວຽດນາມ ແລະ ໄທ ໄດ້ຂະ ຫຍາຍພື້ນທີ່ສວນຢາງເຂົ້າໄປ ໃນລາວ ຊຶ່ງມີທີ່ດິນ ອຸດົມສົມບູນ ແລະ ຄ່າແຮງງານຖືກ. ທຶນຢາງພາລາຂອງນັກລົງທຶນຕ່າງປະເທດ ດັ່ງກ່າວມີລັກສະນະການດຳເນີນກິດຈະການທີ່ແຕກຕ່າງກັນ, ຄວາມແຕກຕ່າງກັນນີ້ ມີຜົນກະທົບສຳຄັນຕໍ່ການພັດທະນາອຸດສາຫະກຳກະສິກຳຢາງພາລາໃນລາວຕະຫຼອດຈົນການປ່ຽນແປງ ການນຳໃຊ້ທີ່ດິນ ແລະ ສະພາບຄວາມເປັນຢູ່ຂອງກະສິກຳ, ທີ່ເຂົ້າມາກ່ຽວຂ້ອງກັບການລົງທຶນດັ່ງກ່າວ.

ການຂະຫຍາຍຕົວຂອງການປູກຢາງພາລາຢູ່ໃນ ສປປ ລາວ ທີ່ຜ່ານມານັ້ນທີ່ມີຂະໜາດການລົງທຶນທີ່ແຕກຕ່າງກັນ 5 ປະເພດ ຄື:

1. ***<u>ທຶນເອກະຊົນທ້ອງຖິ່ນ:</u>*** ເປັນການລົງທຶນໂດຍນັກລົງທຶນລາວ ທີ່ມີຂະໜາດການລົງທຶນບໍ່ຫຼາຍປານໃດ ດຳເນີນການທັງໃນຮູບສຳປະທານທີ່ດິນ ແລະກະສິກຳແບບມີສັນຍາຜູກມັດ
2. ***<u>ທຶນກະສິກຳຍ່ອຍ:</u>*** ເປັນການລົງທຶນຂອງກະສິກຳໃນທີ່ດິນຂອງຕົນເອງ ແລະລະບົບ ກະສິກຳແບບມີສັນຍາຜູກມັດ

3. ***ທຶນເອກະຊົນຕ່າງຊາດ:*** ເປັນການລົງທຶນຂອງພໍ່ຄ້າຄົນກາງ ທ້ອງຖິ່ນບໍລິເວນຊາຍແດນພໍ່ຄ້າເຫຼົ່ານີ້ລົງທຶນດ້ວຍການອອກທຶນ, ແນວພັນເພື່ອຮັບຊື້ນ້ຳຢາງໃນລາຄາທີ່ຕົກລົງກັນໄວ້ ຫຼື ເລາະຮັບຊື້ນ້ຳຢາງ

4. ***ທຶນບໍລິສັດຕ່າງປະເທດ*** : ເປັນການລົງທຶນຕ່າງປະເທດ 100% ອາດຕັ້ງເປັນນິຕິບຸກຄົນໃໝ່ ຫຼື ເປັນສາຂາຂອງວິສາຫະກິດຕ່າງປະເທດ ສ່ວນໃຫຍ່ເປັນທຶນຂອງນັກລົງທຶນຈາກປະເທດຈີນ, ຫວຽດນາມ ແລະ ໄທ ໃນຮູບແບບສຳປະທານທີ່ດິນ ແລະ ການຜະລິດແບບມີສັນຍາຜູກ ພັນ.

5. ***ທຶນບໍລິສັດຮ່ວມທຶນຕ່າງຊາດລະຫວ່າງເອກະຊົນ:*** ເປັນການຮ່ວມທຶນລະຫວ່າງທຶນເອກະຊົນຕ່າງປະເທດ ແລະ ເອກະຊົນໃນລາວ.

ການລົງທຶນໃນ 5 ປະເພດນັ້ນ ມີລັກສະນະການໃຊ້ຊັບພະຍາກອນທີ່ແຕກຕ່າງກັນ ດັ່ງຈະເຫັນໄດ້ວ່າ ທຶນປະເພດທີ 4 ແລະ 5 ເປັນທຶນຂະໜາດໃຫຍ່ທີ່ສຸດ ເຂົ້າເຖິງທີ່ດິນໄດ້ຫຼາຍ ແລະ ກໍ່ໃຫ້ເກີດການຮ່ວມຕົວຂອງທຶນທັງທີ່ດິນ ແລະ ລາຍໄດ້ສູງທີ່ທັ້ງນີ້ການລົງທຶນຂອງບໍລິສັດຕ່າງ ປະເທດມີສັດສ່ວນເຖິງ 77 ສ່ວນຮ້ອຍ ຂອງການລົງທຶນປູກຢາງພາລາໃນ ສປປ ລາວ. ຈາກການສຳຫຼວດຂອງກະຊວງອຸດສາຫະກຳ ແລະ ການຄ້າໃນປີ 2007 (www.moc.gov.la) ພົບວ່າ ມີບໍລິສັດຕ່າງປະເທດເຂົ້າມາລົງທຶນປູກຢາງພາລາໃນ ສປປ ລາວ ປະມານ 40 ບໍລິສັດ ລວມເນື້ອ ທີ່ປະມານ 182,900 ເຮັກຕາ. ຕົວເລກນີ້ບໍ່ນັບລວມເນື້ອທີ່ການປູກຢາງພາລາຂອງທຶນທ້ອງຖິ່ນ ແລະ ກະສິກຳລາຍຍ່ອຍ ຊຶ່ງຄະນະຄົ້ນຄ້ວາບໍ່ມີຕົວເລກທີ່ຊັດເຈນວ່າມີເນື້ອທີ່ຢູ່ຈຳ ນວນເທົ່າໃດ.

ການລົງທຶນແຕ່ລະປະເພດຕ່າງໆ ດັ່ງກ່າວ ມີການຄຸ້ມຄອງການຜະລິດທີ່ແຕກຕ່າງກັນໃນ 4 ລັກສະນະຄື:

1. ***ລະບົບນິຄົມກະສິກຳຢາງພາລາ (rubber plantation):*** ເປັນການຄຸ້ມຄອງສວນຢາງພາລາຂະໜາດໃຫຍ່ທີ່ໃຊ້ທີ່ດິນ ແລະ ແຮງງານຈຳນວນຫຼວງຫຼາຍ. ສ່ວນໃຫຍ່ເປັນທຶນຂະໜາດໃຫຍ່. ລະບົບນີ້ເຈົ້າຂອງສວນ ເປັນຜູ້ຄວບຄຸມ ແລະ ຜູກຂາດການຄຸ້ມຄອງທຶນ. ເທັກໂນໂລຊີ ແລະ ແຮງງານ ເປັນການຜະລິດຊະນິດດຽວທີ່ເປັນຈຳນວນຫຼາຍ ເຖິງແມ່ນວ່າລະບົບນີ້ຈະຕ້ອງການແຮງງານຈຳນວນຫຼາຍ ແຕ່ການຈ້າງງານບໍ່ສະໝ່ຳສະເໝີແຕກຕ່າງໄປຕາມລະດູການ. ການຈ້າງງານໃນນິຄົມຢາງພາລາໃນລາວ ຈຶ່ງມັກມີລັກສະນະຊົ່ວຄາວ ແລະ ບໍ່ສະໝ່ຳສະເໝີ ວຽກຈະມີຫຼາຍໃນຊ່ວງການບຸກເບີກ, ຖາງ ແລະ ປູກ ແຕ່ວຽກຈະຫຼຸດໜ້ອຍລົງໃນຊ່ວງຢາງເຕີບໃຫຍ່ກ່ອນໃຫ້ນ້ຳຢາງ. ການຈ້າງງານໃນລະບົບນິຄົມ ຈຶ່ງສ້າງຄວາມບໍ່ໝັ້ນຄົງ ແລະ ມີຄວາມສ່ຽງ ໃນການດຳລົງຊີວິດ.

2. ***ລະບົບກະສິກຳແບບມີສັນຍາຜູກມັດ:*** ເປັນລະບົບການຄຸ້ມຄອງສວນຢາງທີ່ເກີດຂຶ້ນ ຈາກຂໍ້ຕົກລົງລະຫວ່າງຊາວກະສິກອນ ແລະ ບໍລິສັດ ຫຼື ພໍ່ຄ້າຄົນກາງໃນການປູກ, ຈັດການ ແລະ ຮັບ

ຊື້ຢາງພາລາໃນລາຄາ ແລະປະລິມານທີ່ຕົກລົງກັນໄວ້. ໃນລະບົບນີ້ຊາວກະສິກອນຍັງຄົງໄດ້ສິດໃນການໃຊ້ທີ່ດິນ ແລະ ຄຸ້ມຄອງສວນຢາງພາລາດ້ວຍຕົນເອງ ໂດຍການລົງທຶນທີ່ດິນ ແລະ ແຮງງານ, ຂະນະທີ່ບໍລິສັດ ຫຼື ພໍ່ຄ້າຄົນກາງລົງທຶນແນວພັນ, ເທັກໂນໂລຊີ ແລະ ຕະຫຼາດ.

3. ***ລະບົບສ່ວນແຮງງານ ແລະ ຜົນຜະລິດພາຍໃຕ້ສະມາຄົມກະສິກອນ:*** ເປັນລະບົບທີ່ສະມາຄົມກະສິກອນໃນບ້ານ, ຈະຈັດສັນທີ່ດິນໃຫ້ກະສິກອນສະມາຊິກ ທີ່ເຮັດສັນຍາກັບສະມາຄົມປູກ, ບົວລະບັດຮັກສາ ແລະ ກີດນ້ຳຢາງ

4. ***ລະບົບຟາມຂະໜາດນ້ອຍ:*** ເປັນການລົງທຶນໂດຍກະສິກອນລາຍຍ່ອຍ ທັງໃນເລື່ອງທີ່ດິນ, ແຮງງານ ແລະ ຫາຕະຫຼາດດ້ວຍຕົນເອງ ຫຼື ລົງທຶນທີ່ດິນ ແລະ ແຮງງານ ກໍລະນີນີ້ມັກເປັນກຸ່ມຊົນ ເຜົ່າທີ່ຢູ່ບ່ອນທີ່ສູງ ທີ່ມີເຄືອລະຍາດຢູ່ຕາມຊາຍແດນຂອງລາວ ຊຶ່ງປູກຢາງພາລາຢູ່ກ່ອນແລ້ວ ໃຫ້ຄວາມຊ່ວຍເຫຼືອໃນດ້ານເທັກໂນໂລຊີ, ທຶນ, ຄວາມຮູ້ໃນການປູກ ແລະ ການກີດຢາງລວມທັງການຕະຫຼາດ.

ທຶນຂະໜາດໃຫຍ່ ທັງທຶນໃນປະເທດ ແລະ ທຶນຕ່າງປະເທດມັກເປັນທຶນທີ່ດຳເນີນການໃນລັກສະນະ ຂອງສວນຢາງພາລາຂະໜາດໃຫຍ່ ໃນຮູບ ສວນຢາງພາລາ ໂດຍການຂໍສຳປະທານທີ່ດິນຂະໜາດໃຫຍ່ຈາກລັດຖະບານລາວ ໄລຍະເວລາຕັ້ງແຕ່ 30-35 ປີ.

ການຂະຫຍາຍຕົວຂອງຢາງພາລາໃນລາວໃນທົດສະວັດ 2000 ມີແບບແຜນແຕກຕ່າງຈາກປະເທດ ອື່ນໆ ໃນອາຊີຕະເວັນອອກສ່ຽງໃຕ້ ໂດຍມີແນວໂນ້ມຂອງການຂະຫຍາຍຕົວຂອງສວນຢາງພາລາ ຂະໜາດໃຫຍ່ພາຍໃຕ້ການລົງທຶນຂອງນັກລົງທຶນຕ່າງປະເທດ ຫຼາຍກ່ວາການລົງທຶນພາຍໃນ ປະເທດຕົນເອງ. ໃນຂະນະທີ່ການວາງແຜນການຈຳແນກປະເພດ ແລະ ການໃຊ້ປະໂຫຍດທີ່ດິນທົ່ວປະເທດ (zoning) ຍັງບໍ່ໄດ້ມີການດຳເນີນການຈັດສັນຢ່າງເຄັ່ງຄັດເທື່ອ ການໃຫ້ສຳປະທານທີ່ດິນຂະໜາດໃຫຍ່ໃຫ້ແກ່ສວນຢາງພາລາໄດ້ເປັນໄປຢ່າງກ້ວາງຂວາງທົ່ວປະເທດ.

ການເຂົ້າຮ່ວມໃນອຸດສາຫະກຳຢາງພາລາ ໃນຮູບແບບທີ່ແຕກຕ່າງກັນຂອງ ກະສິກອນໃນແຕ່ລະພາກສິ່ງຜົນຕໍ່ໂອກາດໃນການພັດທະນາເສດຖະກິດ, ທີ່ບໍ່ສະເໝີພາບກັນ ຂອງຄົວ ເຮືອນຊາວກະສິ ກອນ. ທັງນີ້ກໍຍ້ອນວ່າໂດຍສ່ວນໃຫຍ່ແລ້ວ ສວນຢາງພາລາ ຈະແຜ່ຂະຫຍາຍໄປບ່ອນຊຸມຊົນ ຂອງກຸ່ມຄົນບັນດາເຜົ່າເປັນຕົ້ນ: ລາວເທິງ ແລະ ລາວສູງ ເປັນສ່ວນໃຫຍ່. ສ່ວນຫນຶ່ງເປັນຜົນມາຈາກ ນະໂຍບາຍການຫລຸດການເຮັດໄຮ່ຫມູນວຽນ ແລະ ເງື່ອນໄຂຂອງ ສະພາບດິນຟ້າອາກາດ ແລະ ພູມມີປະເທດທີ່ເຫມາະສົມຕໍ່ການເຕີບໃຫຍ່ ຂະຫຍາຍຕົວຂອງຢາງພາລາ. ແນວໃດກໍ່ຕາມ, ການເຂົ້າຮ່ວມໃນອຸດສາຫະກຳຢາງພາລາ ຂອງກະສິກອນກຸ່ມຊົນບັນດາເຜົ່າ ໃນພາກເໜືອ

ແລະ ພາກໃຕ້ໄດ້ເປີດທິດທາງ ແລະໂອກາດຕໍ່ການພັດທະນາເສດຖະກິດ ທີ່ແຕກຕ່າງກັນຢ່າງ ຂາດຂັ້ນ, ໂດຍທີ່ໃນຂະນະທີ່ຊາວກະສິກອນໃນພາກເໜືອ ສາມາດເລືອກເອົາຢາງພາລາ ເຂົ້າ ເປັນສ່ວນໜຶ່ງ ຂອງ ການກະເສດ ແລະ ສະສົມທຶນເພີ່ມຂຶ້ນຈາກການປູກຢາງພາລາ. ສຳລັບຊາວ ກະສິກອນ ໃນພາກໃຕ້ແມ່ນຖືກປ່ຽນແປສະພາບເປັນພຽງກຳມະກອນຜູ້ໃຊ້ແຮງງານໃນເນື້ອ ທີ່ຂອງສວນຢາງພາລາ ໂດຍໄດ້ຮັບຄ່າຈ້າງເປັນລາຍວັນເທົ່ານັ້ນ. ຄວາມແຕກຕ່າງດັ່ງກ່າວເປັນ ຜົນໂດຍກົງມາຈາກຮູບແບບ ຂອງສວນຢາງພາລາທີ່ແຕກຕ່າງກັນ ລະຫວ່າງ ສຳປະທານຂະ ໜາດໃຫຍ່ ແລະ ສວນຢາງຂະໜາດນ້ອຍ.

ຮູບແບບການລົງທຶນ, ໃນສວນຢາງພາລາທີ່ແຕກຕ່າງກັນ ມີຜົນຕໍ່ເສດຖະກິດທີ່ຕ່າງກັນ ໃນລະບົບສຳປະທານທີ່ດິນຂະໜາດໃຫຍ່. ເຊິ່ງມີທັງໃນພາກເໜືອ, ພາກກາງ ແລະ ພາກໃຕ້ ນັ້ນ. ທຶນ ແລະ ທີ່ດິນຈະເຕັມໂຮມທີ່ບໍລິສັດເປັນສຳຄັນ ລວມທັງຄວາມຮູ້ ແລະ ເຕັກໂນໂລຊີ ໃນການດຳເນີນ ສວນຢາງພາລາ ໂດຍທີ່ກະສິກອນຈະໄດ້ຮັບພຽງຄ່າແຮງງານເທົ່ານັ້ນ. ແຕ່ໃນຮູບແບບ ຂອງ ການ ລົງທຶນເຮັດການກະສິກຳແບບມີສັນຍາຜູກມັດ ແລະ ສວນຢາງຂະໜາດນ້ອຍທີ່ຊາວກະສິກອນເປັນເຈົ້າຂອງສວນຢາງເອງນັ້ນ ພົບວ່າມີການ ແຈກຢາຍຂອງທຶນຫລາຍກວ່າ. ຍ້ອນວ່າໃນລະບົບສວນຢາງຂະໜາດນ້ອຍ ຈະມີ ການແຈກ ຢາຍຂອງການລົງທຶນໃສ່ການວ່າຈ້າງແຮງງານ, ການຊື້ຂາຍຜົນຜະລິດສູງກ່ວາໃນ ລະ ບົບສຳປະ ທານ. ລາຍໄດ້ຈາກການຂາຍຜົນຜະລິດນ້ຳຢາງນັ້ນຕົກເຖິງມືກະສິກອນ ໂດຍກົງເຊິ່ງ ເຮັດໃຫ້ກະ ສິກອນສາມາດສະສົມທຶນ ແລະ ສ້າງກຳໄລຈາກ ສວນຢາງພາລາໄດ້.

ຈາກການປະເມີນລາຍຮັບ ຂອງຊາວກະສິກອນ, ຜູ້ເປັນເຈົ້າຂອງສວນຢາງພາລາໃນປີ 2006 ສວນຢາງພາລາຈະໃຫ້ນ້ຳຢາງໂດຍສະເລ່ຍ 1,360 ກິໂລກຼາມຕໍ່ເຮັກຕາ ຊຶ່ງສ້າງລາຍ ໄດ້ປະມານ 7.2 ລ້ານກີບຕໍ່ປີ (880 ໂດລາສະຫາລັດ) (Ketphanf et al 2006) ຫາກຄົວເຮືອນ ໜຶ່ງປູກຢາງ 3 ເຮັກຕາ ກໍ່ຈະມີລາຍໄດ້ປະມານ 21.6 ລ້ານກີບ (2,640 ໂດລາສະຫາລັດ) (ສະ ເລ່ຍ 1.8 ລ້ານກີບຕໍ່ເດືອນ) ໃນຂະນະ ນີ້ຍັງບໍ່ມີຕົວເລກສະເລັ່ຍກ່ຽວກັບລາຍຮັບທີ່ແທ້ຈິງຈາກການເປັນແຮງງານໃຫ້ແກ່ສວນຢາງພາລາໃ ນພາກໃຕ້ຂອງລາວເທື່ອ ແຕ່ໃນໄລຍະປີທຳອິດພົບວ່າກຳມະກອນໃນສວນຢາງພາລາໄດ້ຄ່າຈ້າງ ສະເລ່ຍ ສີ່ແສນ ເຖິງ ເຈັດ ແສນກີບຕໍ່ເດືອນ.

ເມື່ອສົມທຽບແລ້ວ ຄວາມບໍ່ໝັ້ນຄົງທາງເສດຖະກິດຂອງກະສິກອນທີ່ເຂົ້າຮ່ວມກັບ ອຸດ ສາຫະກຳຢາງພາລາດຳເນີນໄປໃນລັກສະນະທີ່ແຕກຕ່າງກັນ. ເວົ້າຄືໃນຂະນະຊາວກະສິກອນ ທີ່ປ່ຽນແປງ ສະພາບເປັນກຳມະກອນຮັບຈ້າງໃນນິຄົມສວນຢາງພາລາ. ການສູນເສຍທີ່ດິນປູກຝັງ ແລະ ແຫລ່ງອາຫານອື່ນໆ ເຮັດໃຫ້ຍັງເຫລືອທາງເລືອກໃນການດຳລົງຊີວິດພຽງປະການດຽວຄືຄ່າ ຈ້າງທີ່ໄດ້ຈາກການເຮັດວຽກໃນສວນຢາງ ເຊິ່ງມີຄວາມບໍ່ແນ່ນອນ. ຂຶ້ນກັບບໍລິມາດຂອງວຽກງານ

ໃນສວນຢາງພາລາ ເຊິ່ງມີບໍ່ສະຫມ່ຳສະເຫມີ. ຄວາມບໍ່ຫມັ້ນຄົງ ທາງເສດຖະກິດ ຂອງກະສິກອນສວນຢາງພາລາ ທີ່ເປັນເຈົ້າຂອງສວນຢາງພາລາດ້ວຍຕົນເອງ. ເກີດມາຈາກການຂາດຄວາມຮູ້ກ່ຽວກັບພຶດເສດຖະກິດຊະນິດໃຫມ່ນີ້ເຮັດໃຫ້ບໍ່ສາມາດຈັດການສວນໄດ້ຢ່າງມີປະສິດທິພາບດີພໍ. ຕະຫລອດຈົນ ການບໍ່ສາມາດເຂົ້າເຖິງຕະຫລາດໄດ້ດ້ວຍຕົນເອງ. ເຮັດໃຫ້ມີອຳນາດຕໍ່ລອງທີ່ຕ່ຳໃນການຊື້ຂາຍນ້ຳ ຢາງກັບພໍ່ຄ້າຄົນກາງ.ແຕ່ກໍ່ຍັງມີທາງເລືອກເພື່ອເລືອກພໍ່ຄ້າຄົນກາງທີ່ໃຫ້ລາຄາທີ່ຕົນມີຄວາມພໍ ໃຈ. ແຕ່ຊາວກະສິກອນທີ່ເຂົ້າຮ່ວມໃນກິດຈະການຢາງພາລາໃນຮູບແບບກະສິກຳແບບ ມີສັນຍາຜູກ ມັດນັ້ນ ອຳນາດໃນການຕໍ່ລອງມີຕ່ຳກວ່າ ໂດຍຕ້ອງຂຶ້ນກັບເງື່ອນໄຂທີ່ກຳຫນົດໂດຍ ບໍລິສັດທີ່ຈັດ ຫາທຶນ ແລະ ເຕັກໂນໂລຊີ. ເຖິງແມ່ນວ່າອຳນາດຕໍ່ລອງຈະຕ່ຳແຕ່ກໍ່ນັບວ່າກະສິກອນ ທີ່ຍັງເປັນຜູ້ມີສິດນຳໃຊ້ທີ່ດິນນັ້ນ ມີລາຍໄດ້ຈາກເສດຖະກິດຢາງພາລາທີ່ສູງ ແລະມີສະເຖຍລະພາບຫລາຍ ກ່ວາກຳມະກອນຮັບຈ້າງໃນນິຄົມຢາງພາລາ.

ໃນເລື່ອງຄວາມສາມາດ ຂອງລາວໃນການພັດທະນາໄປສູ່ອຸດສາຫະກຳຢາງພາລາ ເມື່ອທຽບກັບປະເທດຕ່າງໆ ທີ່ກ່ຽວຂ້ອງກັບອຸດສາຫະກຳຢາງພາລາແລ້ວ, ລາວກ້າວເຂົ້າມາສູ່ອຸດສາຫະກຳຢາງພາລາທີ່ຊ້າກ່ວາປະເທດອື່ນໆ ແລະ ດ້ວຍຄວາມພ້ອມທີ່ໜ້ອຍທີ່ສຸດ, ໃນຂະນະທີ່ປະເທດທີ່ເລີ່ມປູກຢາງພາລາມາເປັນເວລາດົນນານແລ້ວ ເຊັ່ນ: ໄທ, ຈີນ ແລະ ຫວຽດນາມ ໄດ້ມີການພັດທະນາເທັກໂນໂລຊີ ແລະ ວິຊາການໄປຢ່າງກ້າວໜ້າ. ການທີ່ລັດຖະບານຍັງບໍ່ທັນມີນະໂຍບາຍ, ມາດຕະການ ຫຼື ລວມໄປເຖິງກົດໝາຍໃນການສົ່ງເສີມທາງດ້ານທຶນ, ເທັກໂນໂລຊີ ແລະວິຊາການໃຫ້ແກ່ກະສິກອນເທື່ອ ນັ້ນຈະເຮັດໃຫ້ຊາວກະສິກອນໃນລາວຕ້ອງເພິ່ງພາທຶນ ແລະເທັກໂນໂລຊີຈາກທຶນຕ່າງປະເທດເປັນສຳຄັນ.

ການທີ່ກະສິກອນໃນລາວ ຍັງບໍ່ໄດ້ຮັບການສົ່ງເສີມພຽງພໍຈາກລັດ, ຈະເຮັດໃຫ້ກະສິກອນທີ່ປູກຢາງພາລາຂາດຄວາມຮູ້ ແລະ ຂໍ້ມູນຕ່າງໆ ທີ່ຈຳເປັນກ່ຽວກັບຢາງພາລາ ເຊັ່ນ: ການຜະລິດ, ການຕະຫຼາດ ຫຼື ການຂາຍນ້ຳຢາງທີ່ມີຢູ່ນັ້ນ ກໍ່ມີປະສິດທິພາບການຜະ ລິດໃນລະດັບຕ່ຳ. ການຂາຍພຽງນ້ຳຢາງດິບ ເຮັດໃຫ້ຊ່ອງທາງໃນການສ້າງລາຍໄດ້ຈາກຢາງພາ ລາ ຂອງກະສິກອນຍັງມີຂໍ້ຈຳກັດ. ນອກຈາກນັ້ນ ການຂາດການພັດທະນາອຸດສາຫະກຳແປຮູບຢາງພາລາ ເຮັດໃຫ້ຕະຫຼາດຮັບຊື້ຢາງພາລາທັງໝົດຂອງລາວຢູ່ນອກປະເທດ. ການຂາດທັງທຶນໃນການຜະລິດທີ່ບໍ່ພຽງພໍ ແລະ ການເຂົ້າ ບໍ່ເຖິງຕະຫຼາດ ເຮັດໃຫ້ກະສິກອນຜູ້ຜະລິດຢາງພາລາໃນລາວມີຄວາມສາມາດໃນການເຈລະຈາທີ່ຕ່ຳ ເມື່ອທຽບກັບກະສິກອນໃນປະເທດອື່ນໆ. ທັ້ງນີ້ກໍ່ຍ້ອນການຂາດການລວມຕົວກັນຂອງກະສິກອນທີ່ເຂັ້ມແຂງ ແລະ ຍັງເປັນເງື່ອນໄຂໜຶ່ງທີ່ເຮັດໃຫ້ຕະຫຼາດຢາງພາລາຢູ່ໃນອຳນາດ ຂອງຜູ້ຊື້ນອກປະເທດ.

ແນວທາງການພັດທະນາອຸດສາຫະກຳຢາງພາລາໃນ ສປປ ລາວ ຈຶ່ງຍັງຄົງມີບັນຫາໃຫ່ຍທີ່ຈຳເປັນຕ້ອງມີການຄົ້ນຄ້ວາ ແລະ ວິເຄາະເພື່ອຕອບຄຳຖາມຕໍ່ໄປວ່າແນວທາງໃດທີ່ ເໝາະສົມ

ທີ່ສາມາດກະຈາຍຜົນປະໂຫຍດທາງເສດຖະກິດໄປເຖິງປະຊາຊົນທີ່ທຸກຍາກໄດ້ ຫຼາຍທີ່ສຸດ. ປະຊາຊົນເຫຼົ່ານີ້ມັກບໍ່ມີທຶນພຽງພໍໃນການປູກຢາງພາລາ, ຊຶ່ງຕ້ອງໃຊ້ເງິນທຶນບໍ່ແມ່ນໜ້ອຍເຖິງແມ່ນວ່າ ຈະເປັນສວນ ຢາງຂະໜາດນ້ອຍກໍ່ຕາມ. ດັ່ງນັ້ນ, ແນວທາງການປູກພືດເສດຖະກິດດ້ານດຽວ ອາດບໍ່ແມ່ນ ເສັ້ນທາງ ທີ່ຈະນຳໄປສູ່ການຫຼຸດຜ່ອນຄວາມທຸກຍາກໄດ້ສຳລັບ ສປປ ລາວ. ແລ້ວແນວທາງການ ຜະລິດກະສິ ກຳທີ່ຫຼາກຫຼາຍ ເພື່ອສ້າງຫຼັກປະກັນຄວາມໝັ້ນຄົງທາງດ້ານອາຫານ ອາດຈະເປັນແນວທາງທີ່ລັດຄວນ ນຳມາພິຈາລະນາຄຽງຄູ່ໄປກັບການຄຸ້ມຄອງທີ່ດິນ ຂອງປະເທດໃຫ້ຫຼາຍຂຶ້ນ.

## ພາກທີ II ການສຳປະທານທີ່ດິນໃນ ສປປ ລາວ

### ✸ ປະຫວັດສາດ ແລະ ການພັດທະນາ

ການເລີ່ມຂຶ້ນ ຂອງການສຳປະທານທີ່ດິນໃນ ສປປ ລາວນັ້ນ ພົວພັນໂດຍກົງກັບການປ່ຽນແປງນະໂຍບາຍການພັດທະນາເສດຖະກິດຂອງລາວ, ໃນຊ່ວງປາຍທົດສະວັດ 1980 ຫາຕົ້ນທົດສະວັດ1990, ໂດຍການສຳປະທານທີ່ດິນຂະໜາດໃຫຍ່ ເພື່ອປູກໄມ້ເສດຖະກິດຂຶ້ນຄັ້ງທຳອິດໃນປີ 1994. ເປັນການອະນຸມັດການສຳປະທານທີ່ດິນ ເພື່ອປູກໄມ້ເປັນສິນຄ້າໃນ ແຂວງ ຈຳປາສັກ ໃຫ້ກັບບໍລິສັດເອເຊຍເທັກຈາກປະເທດໄທ (ວັນທີ 7 ທັນວາ 1994). ໃນເນື້ອທີ່ 16,000 ເຮັກຕາ ໄລຍະເວລາ 55 ປີ ມູນຄ່າລວມ 12.8 ລ້ານໂດລາສະຫະລັດ. ຈາກນັ້ນ ເປັນຕົ້ນມາ ການປູກໄມ້ ຫຼື ພືດອຸດສາຫະກຳໃນ ສປປ ລາວ ກໍ່ມີການຂະຫຍາຍຕົວເພີ່ມຂຶ້ນ.

ນະໂຍບາຍການປ່ຽນແປງໃໝ່ທາງເສດຖະກິດທີ່ສຳຄັນຂອງລັດຖະບານ ສປປ ລາວ ໄດ້ແກ່ການປະກາດໃຊ້ນະໂຍບາຍ “ການຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດ ສິນຄ້າ” ເປັນທິດທາງຫຼັກໃນການພັດທະນາເສດຖະກິດ ໂດຍການໃຊ້ກົນໄກຕະຫຼາດການຄ້າເສລີ. ການເປີດກ້ວາງການລົງທຶນສຳລັບນັກລົງທຶນຕ່າງປະເທດຫຼາຍຂຶ້ນ, ການອອກກົດໝາຍສົ່ງເສີມການລົງທຶນ, ການປະກາດໃຊ້ ແລະ ການປັບປຸງແກ້ໄຂດຳລັດ ແລະ ກົດໝາຍກ່ຽວກັບ ປ່າໄມ້, ທີ່ດິນສະບັບຕ່າງໆ ເພື່ອໃຊ້ຊັບພະຍາກອນປ່າໄມ້ ແລະ ທີ່ດິນເພື່ອການພັດທະນາເສດຖະກິດ ດ້ວຍການໃຫ້ສິດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດສຳປະທານທີ່ດິນຂະໜາດໃຫຍ່ເພື່ອ ປູກໄມ້ ຫຼື ພືດອຸດສາຫະກຳເປັນສິນຄ້າ.

ການສຳປະທານທີ່ດິນນັ້ນ ມີການລະບຸໄວ້ໃນກົດໝາຍເປັນຄັ້ງທຳອິດ ໃນດຳລັດວ່າດ້ວຍທີ່ດິນ1992, ໃຫ້ສິດການເຊົ່າ ຫຼື ສຳປະທານທີ່ດິນໃຫ້ແກ່ພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຊາວຕ່າງປະເທດ ແລະ ປະກົດຢູ່ໃນດຳລັດ ແລະກົດໝາຍປ່າໄມ້ ແລະທີ່ດິນສະບັບອື່ນໆໄດ້ແກ່

ດຳລັດນາຍົກລັດຖະມົນຕີວ່າດ້ວຍການຄຸ້ມຄອງ ແລະນຳໃຊ້ປ່າໄມ້ ແລະທີ່ດິນປ່າໄມ້ 1993, ດຳລັດວ່າດ້ວຍການແບ່ງດິນແບ່ງປ່າ, ເພື່ອການປູກໄມ້ ແລະປົກປັກຮັກສາປ່າໄມ້ 1994, ກົດໝາຍວ່າດ້ວຍປ່າໄມ້ 1996, ກົດໝາຍວ່າດ້ວຍທີ່ດິນ 1997, ກົດໝາຍ ວ່າດ້ວຍທີ່ດິນ 2003 ແລະ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ 2005.

ນິຕິກຳສະບັບຕ່າງໆເຫຼົ່ານີ້ ມີຄວາມແຕກຕ່າງກັນໃນແງ່ເນື້ອທີ່ ແລະ ອຳນາດໃນການອະນຸມັດ ຂອງໜ່ວຍງານລັດ ທັງລະດັບສູນກາງ ແລະ ທ້ອງຖິ່ນ ແຕ່ຈຸດປະສົງຂອງນິຕິກຳທຸກສະບັບທີ່ກົງກັນຄືການໃຫ້ເຊົ່າ ຫຼື ສຳປະທານທີ່ດິນ, ໃນທີ່ດິນວ່າງເປົ່າ ຫຼື ເປັນທີ່ດິນເຊື່ອມໂຊມ ຊຶ່ງໃນທາງປະຕິບັດ ການຄົ້ນຄ້ວາຄັ້ງນີ້ພົບວ່າ ທີ່ດິນສຳປະທານເກືອບທັງໝົດເປັນ ດິນໄຮ່, ສວນທີ່ລັດມອບໃຫ້ປະຊາຊົນ, ຕາມນະໂຍບາຍມອບດິນ-ມອບປ່າ. ນອກຈາກນັ້ນ ເຂດສຳປະທານຍັງກວມເອົາບ່ອນລ້ຽງສັດ ແລະ ປ່າຊົມໃຊ້ຂອງປະຊາຊົນອີກດ້ວຍ.

### ✸ ຍຸກຮຸ່ງເຮືອງຂອງການສຳປະທານທີ່ດິນ ເພື່ອປູກໄມ້ເປັນສິນຄ້າ

ນັບຕັ້ງແຕ່ປີ 2000 ເປັນຕົ້ນມາ, ອັດຕາການຂະຫຍາຍຕົວການລົງທຶນຂອງນັກລົງທຶນຕ່າງປະເທດໃນ ສປປ ລາວ. ເພີ່ມຂຶ້ນໃນອັດຕາທີ່ວ່ອງໄວ ໂດຍການລົງທຶນໃນຮູບແບບການສຳປະທານທີ່ດິນຂະໜາດໃຫຍ່, ເພື່ອປູກໄມ້ ຫຼື ພືດເສດຖະກິດເຊັ່ນ: ໄມ້ວິກ, ຢາງພາລາ, ມັນຕົ້ນ ແລະອ້ອຍ. ການລົງທຶນຂອງນັກລົງທຶນຕ່າງປະເທດສ່ວນໃຫຍ່ແມ່ນໃນພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ. ນັບຕັ້ງແຕ່ແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ.

ປະຈຸບັນ ການລົງທຶນປູກໄມ້ເພື່ອສິນຄ້າສ່ວນໃຫຍ່ໃນ ສປປ ລາວ, ເປັນການ ສຳປະທານທີ່ດິນຈາກລັດ ໃນພື້ນທີ່ຂະໜາດໃຫຍ່ເປັນບໍລິເວນກ້ວາງ. ທັງທີ່ເປັນການລົງທຶນທີ່ມາຈາກປະເທດນອກປະເທດ ແລະ ຈາກປະເທດໃນລຸ່ມແມ່ນ້ຳຂອງດ້ວຍກັນເຊັ່ນ: ບໍລິສັດໂອຈິ (ບໍລິສັດ BGA ເກົ່າ) ຈາກປະເທດຍີ່ປຸ່ນ, ປູກໄມ້ວິກ 50,000 ເຮັກຕາ ໃນແຂວງບໍລິຄຳໄຊ ແລະ ຄຳມ່ວນ, ບໍລິສັດ ເບີລາລາວ (Aditya Berla Grasim) ຈາກປະເທດອິນເດຍ ປູກໄມ້ວິກ 30,000 ເຮັກຕາ ໃນແຂວງ ສະຫວັນນະເຂດ, ບໍລິສັດຫວຽດ-ລາວ, ດັກລັກ, ເຢົາຕຽງ ຊຶ່ງມີຂໍ້ຕົກລົງ ການລົງທຶນປູກຢາງພາ ລາໃນເນື້ອທີ່ 30,000 ເຮັກຕາ ໃນແຂວງຈຳປາສັກ ແລະ ສາລະວັນພາກໃຕ້ຂອງລາວ.

### ✸ ຂະບວນການໃຫ້ສຳປະທານທີ່ດິນ

ການໃຫ້ສິດສຳປະທານທີ່ດິນ ເປັນມາດຕະການໜຶ່ງຂອງລັດຖະບານ, ທີ່ໃຊ້ດຶງດູດການລົງທຶນ ໂດຍສະເພາະນັກລົງທຶນຈາກຕ່າງປະເທດ. ຂະບວນການອະນຸມັດສຳປະທານທີ່ດິນທີ່ຜ່ານມາຈຶ່ງກ່ຽວຂ້ອງໂດຍກົງກັບກົດໝາຍ ແລະ ນະໂຍບາຍສົ່ງເສີມການລົງທຶນ ແລະ ໜ່ວຍງານທີ່ມີ

ບົດບາດທີ່ຜ່ານມາກໍ່ຄື ຄະນະກຳມະການແຜນການ ແລະ ການລົງທຶນ (ແຕ່ກ່ອນຄືຄະ ນະກຳມະການຄຸ້ມຄອງການລົງທຶນ ແລະ ຮ່ວມມືຕ່າງປະເທດ) ໂດຍການອະນຸມັດການສຳປະ ທານທີ່ດິນນັ້ນຈະດຳເນີນການໃນຂັ້ນຕອນດຽວກັບການເຮັດສັນຍາການລົງທຶນແບບ“ປະຕູດຽວ” ແລະ ການເຮັດສັນຍາດັ່ງກ່າວຍັງບໍ່ມີການສຳຫຼວດທີ່ດິນກ່ອນການອະນຸມັດສຳປະທານທີ່ດິນ.

ການອະນຸມັດສຳປະທານທີ່ດິນດ້ານກະສິກຳ-ປ່າໄມ້ ຂະໜາດໃຫຍ່ທີ່ຜ່ານມານັ້ນ. ດຳເນີນການໃນຂັ້ນຕອນດຽວກັບການເຮັດສັນຍາລົງທຶນໂຄງການໂດຍ ຄະນະກຳມະການແຜນການ ແລະ ການລົງທຶນເປັນຜູ້ລົງນາມ, ໃນຖານະຕາງໜ້າລັດຖະບານ ໄລຍະເວລາສຳປະທານຕັ້ງແຕ່ 30-50 ປີ ແລະ 75 ປີ ໃນກໍລະນີທີ່ເປັນການລົງທຶນໃນເຂດເສດຖະກິດພິເສດ ໂດຍການອານຸມັດສຳປະທານທີ່ດິນໃຫ້ແກ່ບໍລິສັດຕ່າງປະເທດຫລາຍແຫ່ງ ສ່ວນຫລາຍດຳເນີນການກ່ອນການສຶກສາຄວາມເປັນໄປໄດ້ທາງເສດຖະກິດ (Feasibility study)

ຂັ້ນຕອນການອະນຸມັດສຳປະທານທີ່ດິນຂອງບໍລິສັດຕ່າງປະເທດຢູ່ຫຼາຍບ່ອນໃນລາວ , ມັກດຳເນີນການກ່ອນການຈັດເຮັດບົດວິພາກຄວາມເປັນໄປໄດ້ທາງເສດຖະກິດ ແລະ ບົດລາຍງານປະເມີນຜົນກະທົບດ້ານສິ່ງແວດລ້ອມ (fea -sibility study).

ການອະນຸມັດການສຳປະທານທີ່ດິນມັກເກີດຂຶ້ນ ໂດຍທີ່ຍັງບໍ່ໄດ້ມີການສຳຫຼວດເນື້ອທີ່ດິນ ການໃຊ້ປະໂຫຍດຂອງປະຊາຊົນ ແລະ ຄວາມເໝາະສົມທາງກາຍະພາບຂອງເນື້ອທີ່ດິນຢ່າງລະອຽດ ລວມທັງບໍ່ໄດ້ມີການສຶກສາປະເມີນຜົນກະທົບດ້ານເສດຖະກິດ ແລະ ສິ່ງແວດລ້ອມກ່ອນອະນຸມັດສຳປະທານທີ່ດິນ ແລະ ການສູນເສຍທີ່ດິນຂອງປະຊາຊົນເກີດຂຶ້ນຢ່າງວ່ອງໄວ ແລະ ປະຊາຊົນບໍ່ໄດ້ຮັບຮູ້ມາກ່ອນ ດັ່ງທີ່ ທ່ານ ຄຳອ້ວນ ບຸບຜາ ລັດຖະມົນຕີປະຈຳສຳນັກງານນາຍົກລັດ ຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ກ່າວໄວ້ໃນກອງປະຊຸມ “ການໃຊ້ທີ່ດິນເພື່ອການປູກໄມ້ເປັນສິນຄ້າ” ເມື່ອວັນທີ 14-15 ກຸມພາ 2007

*“ ການໃຫ້ສຳປະທານ ຫຼື ໃຫ້ເຊົ່າທີ່ດິນສຳລັບການປູກໄມ້ເປັນບໍລິເວນກ້ວາງໃຫຍ່ ແລະ ໄລຍະເວລາສຳປະທານຍາວນານເກີນໄປ ໂດຍເນື້ອທີ່ດິນຍັງບໍ່ທັນໄດ້ຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນຈະເຮັດໃຫ້ເກີດບັນຫາທາງສັງຄົມ ແລະ ສິ່ງເວດລ້ອມ ຈຳເປັນຕ້ອງໄດ້ຍົກຍ້າຍປະຊາ ຊົນ ຫຼື ເວນຄືນທີ່ດິນທີ່ປະຊາຊົນທຳການຜະລິດ ເຮັດໃຫ້ປະຊາຊົນສູນ ເສຍບ່ອນທຳມາຫາກິນປະຈຳວັນ ແລະ ເສຍສິດການໃຊ້ຍາວນານ ”*

ຂະບວນການໃຫ້ສຳປະທານທີ່ດິນທີ່ຜ່ານມາ ມີຄວາມຊ້ຳຊ້ອນຂອງໜ່ວຍງານ, ກ່ຽວກັບການສຳປະທານທີ່ດິນ ແລະ ຂາດກົດເກນມາດຕະການທີ່ເປັນອັນດຽວກັນ ໃນການໃຫ້ເຊົ່າ ຫຼື ສຳ

ປະທານທີ່ດິນນັ້ນຕ້ອງໃຫ້ສອດຄ່ອງກັບກົດໝາຍ ແລະ ດຳລັດຫຼາຍສະບັບ ທີ່ໄດ້ລະບຸຂະໜາດເນື້ອທີ່ສູງສຸດໃນການສຳປະທານຂອງແຕ່ລະກິດຈະການ ເຊັ່ນວ່າ: ກົດໝາຍປ່າໄມ້ 1996 ໃຫ້ອຳນາດລັດຖະບານ ໂດຍການເຫັນດີຈາກສະພາແຫ່ງຊາດ ການອະນຸມັດສຳປະທານທີ່ດິນເນື້ອທີ່ຫຼາຍກ່ວາ 10,000 ເຮັກຕາຂຶ້ນໄປ. ແຕ່ໃນກົດໝາຍວ່າດ້ວຍທີ່ດິນ 1997 ໃຫ້ອຳນາດຂອງກະຊວງການເງິນເປັນຜູ້ອະນຸມັດການເຊົ່າທີ່ດິນ ໂດຍຄວາມເຫັນດີຂອງສະພາແຫ່ງຊາດ ຊຶ່ງລ້າສຸດຕາມກົດໝາຍວ່າດ້ວຍທີ່ດິນ 2003 ໃຫ້ອຳນາດກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍເຫັນດີຈາກ ລັດຖະບານ. ຖ້າເກີນ 10.000 ເຮັກຕາ ຕ້ອງໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ.

ເຖິງແມ່ນວ່າດ້ານໜຶ່ງ ລັດຖະບານໄດ້ວາງນະໂຍບາຍທີ່ດິນ ເພື່ອຕອບສະໜອງການສົ່ງເສີມການລົງທຶນໃກ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ດ້ວຍການຫັນປ່ຽນຊັບສິນ (ທີ່ດິນ) ໃຫ້ເປັນທຶນຕາມນະໂຍບາຍຂອງລັດຖະບານ, ແຕ່ໃນອີກດ້ານໜຶ່ງ ລັດຖະບານເຫັນວ່າການດຳເນີນການກ່ຽວກັບການສຳປະທານທີ່ດິນທີ່ຜ່ານມາ ໄດ້ເກີດປະກົດການຫຍໍ້ທໍ້ໃນດ້ານສັງ ຄົມ ແລະ ສິ່ງແວດລ້ອມ ແລະ ຜົນປະໂຫຍດທີ່ລັດໄດ້ຮັບມີມູນຄ່າຕ່ຳ ອີກທັງຍັງນຳໄປສູ່ການກະທົບກະເທືອນຕໍ່ສິດນຳໃຊ້ທີ່ດິນຂອງປະຊາຊົນຜູ້ທີ່ໄດ້ຮັບໃບຢັ້ງຢືນສິດທີ່ດິນແລ້ວ

ແນວໂນ້ມອ່ຽງໄປທາງດ້ານເສດຖະກິດ ການລົງທຶນໃນພາບລວມ ເຮັດໃຫ້ຂາດການຄຳນຶງເຖິງຜົນກະທົບໃນດ້ານສັງຄົມ ແລະ ສິ່ງແວດລ້ອມ ໂດຍໂຄງການລົງທຶນຕ່າງໆທີ່ບໍ່ມີການສຶກສາປະເມີນຜົນກະທົບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແລະ ຂາດການສຳຫຼວດເນື້ອທີ່ດິນຢ່າງລະອຽດກ່ອນການລົງນາມໃນສັນຍາພັດທະນາໂຄງການ, ຊຶ່ງພິຈາລະນາພຽງມູນຄ່າການລົງທຶນຂອງໂຄງການເທົ່ານັ້ນ. ໃນຂະນະທີ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕາມທີ່ລະບຸໄວ້ໃນກົດໝາຍ ເຊັ່ນ: ກະຊວງກະສິກຳ-ປ່າໄມ້ ມີສ່ວນຮ່ວມໃນຖານະພະຍານໃນການລົງນາມສັນຍາໂຄງການເຊັ່ນດຽວກັບອຳນາດການປົກຄອງແຂວງ ແລະ ເມືອງ ມີບົດບາດໜ້າທີ່ສຳຫຼວດ ແລະ ຈັດ ຫາເນື້ອທີ່ດິນໃຫ້ກັບບໍລິສັດເລົ່ານັ້ນ.

ເນື່ອງຈາກ, ບັນຫາດ້ານຕ່າງໆທີ່ເກີດຂຶ້ນຈາກການສຳປະທານທີ່ດິນ ໃນຫຼາຍໂຄງການ ທີ່ບໍ່ມີບົດວິພາກເສດຖະກິດ ແລະ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມເຮັດໃຫ້ລັດຖະບານ ໂດຍທ່ານນາຍົກລັດຖະມົນຕີ ມີມະຕິໃນປີ 2007 (ເດືອນພຶດສະພາ)ໃຫ້ຢຸດຕິການສຳປະທານທີ່ດິນໄວ້ເປັນການຊົ່ວຄາວ ເພື່ອໃຫ້ມີການສຶກສາຂໍ້ມູນ ແລະ ຕິດຕາມປະເມີນຜົນສາເຫດ ແລະ ບັນຫາທີ່ເກີດຂຶ້ນທີ່ຜ່ານມາ.

## <u>ພາກທີ III</u>: ນິຄົມກະສິກຳຢາງພາລາ ແລະ ຮູບແບບການດຳລົງຊີວິດທີ່ປ່ຽນແປງ

ລາຍງານໃນພາກທີ່ສາມນີ້ ເປັນການນຳສະເໜີກຳລະນີສຶກສາກ່ຽວກັບການຂະຫຍາຍຕົວ ຂອງນິຄົມກະສິກຳຢາງພາລາໃນພາກໃຕ້ຂອງລາວ ໂດຍການປະເມີນຜົນກະທົບທາງດ້ານເສດຖະ ກິດ-ສັງຄົມ ແລະ ສິ່ງແວດລ້ອມ ທີ່ມີຕໍ່ປະຊາຊົນທີ່ອາໄສຢູ່ໃນເຂດນິຄົມ ແລະ ທີ່ເຮັດວຽກຢູ່ກັບບໍລິສັດນິຄົມກະສິກຳຢາງພາລາ.

**✸ ການສູນເສຍທີ່ດິນ ແລະ ຄ່າຊົດເຊີຍ**

ເນື້ອທີ່ດິນສຳປະທານທີ່ຢູ່ໃນເຂດໂຄງການທີ່ສົ່ງມອບໃຫ້ບໍລິສັດບຸກເບີກ ແລະ ປູກຢາງພາລານັ້ນ ສ່ວນຫຼາຍເປັນດິນກະສິກຳ ແລະ ປ່າຊົມໃຊ້ຂອງປະຊາຊົນ. ຈາກການສຶກສາພົບວ່າຄົວເຮືອນກ່ວາ 90 ສ່ວນຮ້ອຍ ຂອງກໍລະນີສຶກສາມີໃບຢັ້ງຢືນສິດທີ່ດິນແບບຊົ່ວຄາວ ຊຶ່ງລັດຖະບານໄດ້ໃຫ້ປະຊາຊົນ ຕັ້ງແຕ່ການມອບດິນມອບປ່າໃນທົດສະວັດ 1990, ແລະ ຫລາຍ ກ່ວາ 80 ສ່ວນຮ້ອຍ ຂອງທີ່ດິນກະສິກຳທີ່ສົ່ງມອບໃຫ້ກັບບໍລິສັດຢາງພາລາເປັນທີ່ດິນທີ່ມີໃບ ຢັ້ງຢືນສິດໃນທີ່ດິນກະສິກຳແບບຊົ່ວຄາວ ໄດ້ຖືກຂໍໃຫ້ສົ່ງມອບທີ່ດິນໃຫ້ກັບບໍລິສັດ. ສະຖານະການດັ່ງກ່າວ ໄດ້ກໍ່ໃຫ້ເກີດການສູນເສຍທີ່ດິນກະສິກຳຈຳນວນຫຼາຍຢູ່ໃນບ້ານຫຼັກ 19, ວັງຄະນານ, ໜອງນ້ຳຂາວໃຫຍ່ ແລະ ອຸດົມສຸກ ຕາມລຳດັບ.

ໃນບ້ານໜອງນ້ຳຂາວໃຫຍ່ ຊາວບ້ານບໍ່ໄດ້ຮັບການແຈ້ງການລ່ວງໜ້າກ່ຽວກັບໂຄງການມາຮູ້ເມື່ອບໍລິສັດນຳລົດດູດເຂົ້າໄປໄຖບຸກເບີກພື້ນທີ່ແລ້ວ ແລະ ບໍ່ມີການຈ່າຍຄ່າຊົດເຊີຍທີ່ດິນແລະ ພືດຜົນໃຫ້ກັບຊາວບ້ານ. ບໍ່ວ່າຈະເປັນສວນພືດຜັກ, ສວນກາເຟ, ສວນໝາກໄມ້ ແລະ ສວນຫຍ້າຄາກໍ່ຕາມ. ສ່ວນໃນບ້ານວັງຄະນານ ຊາວບ້ານບໍ່ຮູ້ວ່າຈຳນວນເນື້ອທີ່ດິນທັງໝົດທີ່ມອບໃຫ້ບໍລິສັດວ່າມີເນື້ອທີ່ຈຳນວນເທົ່າໃດ ໃນຂະນະທີ່ເຈົ້າໜ້າທີ່ຂອງເມືອງກໍ່ມີການບັນທຶກພຽງບາງສ່ວນກ່ຽວກັບເລື່ອງນີ້. ການຂາດຂໍ້ມູນພື້ນຖານກ່ອນການເຂົ້າມາຂອງບໍລິສັດເຮັດໃຫ້ບໍ່ສາມາດທີ່ຈະປະເມີນຄ່າຊົດເຊີຍທີ່ດິນ ແລະ ຜົນລະປູກໄດ້. ໃນບາງບ້ານ ເນື້ອທີ່ດິນຂອງບ້ານຖືກໃຫ້ສຳປະທານທີ່ດິນຫຼາຍກ່ວາ 1 ຄັ້ງ ຫຼື 1 ບໍລິສັດ ເຊັ່ນ: ບ້ານວັງຄະນານ ຖືກຂໍໃຫ້ມອບທີ່ດິນກັບບໍລິສັດດັກລັກເຖິງ 2 ຄັ້ງ, ໃນຂະນະທີ່ບ້ານຫຼັກ 19 ຊາວບ້ານສູນເສຍທີ່ດິນ 1 ໃນ 5 ໃຫ້ກັບບໍລິສັດດັກລັກໃນຄຳຂໍຄັ້ງທຳອິດ ແລະ ຕໍ່ມາຕ້ອງເສຍທີ່ດິນທີ່ເຫຼືອໃຫ້ກັບບໍລິສັດເຢົາຕຽງອີກຄັ້ງ.

**ຕາຕະລາງ 1 : ສະແດງຂໍ້ມູນກ່ອນ ແລະ ຫລັງການໃຫ້ສຳປະທານທີ່ດິນໃນ 6 ໝູ່ບ້ານທີ່ຖືກໂຄງການປູກຢາງພາລາ.**

| ບ້ານ | ປີ | ຊື່ບໍລິສັດ | ທີ່ດິນລວມກ່ອນ ໃຫ້ສຳປະທານ (ha) | ທີ່ດິນລວມ ຫຼັງໃຫ້ ສຳປະທານ (ha) | ທີ່ດິນທັງໝົດທີ່ ບໍລິສັດໄດ້ຮັບ |
|---|---|---|---|---|---|
| ອຸດົມສຸກ | **2005** | ຫວຽດ - ລາວ | **1,319.55** | **673.55** | **49%** |

| | | | | | |
|---|---|---|---|---|---|
| ຫຼັກ 19 | 2006<br>2007 | ດັກລັກ<br>ເຢົາຕຽງ | 48.00<br>234.00 | 27.00 | 90% |
| ໜອງນ້ຳຂາວໃຫຍ່ | 2004 | ດັກລັກ | 555.85 | 155.85 | 72% |
| ໜອງແກ | 2006 | ດັກລັກ | 518.20 | 348.20 | 33% |
| ວັງຄະບານ | 2004<br>2006 | ດັກລັກ | 521.85 | 110.65 | 76% |
| ໜອງເລົາເທິງ | 2007 | ດັກລັກ | 140.00 | 117.50 | 16% |

ຊາວບ້ານທີ່ສູນເສຍທີ່ດິນໄດ້ຮັບການຈ່າຍຄ່າຊົດເຊີຍຈາກບໍລິສັດ ແຕ່ບໍ່ຄົບທຸກຄົວເຮືອນ ໃນດຳລັດກ່ຽວກັບການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍ ຈັດສັນປະຊາຊົນຈາກໂຄງການພັດທະນາໃນປີ 2005 ໄດ້ກຳນົດໄວ້ວ່າ ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາບໍ່ວ່າຈະມີເອກະສານຮັບຮອງສິດ ຫຼື ບໍ່ ຈະຕ້ອງໄດ້ຮັບການຊົດເຊີຍ ຫຼື ຊ່ວຍເຫຼືອ ເພື່ອເປັນຫຼັກຄ້ຳປະກັນຄຸນນະພາບຊີວິດຈະບໍ່ຕົກຕ່ຳຈາກການດຳເນີນໂຄງການ. ແນວໃດກໍ່ ຕາມຂໍ້ມູນກ່ຽວກັບຄ່າຊົດເຊີຍແຕ່ລະຄົວເຮືອນຖືກບັນທຶກ ແລະ ເກັບໄວ້ກັບບໍລິສັດ. ພະນັກງານຂອງເມືອງມີຂໍ້ມູນພຽງບາງ ສ່ວນເທົ່ານັ້ນ. ຕາມທີ່ໄດ້ມີການສຶກສາຄົ້ນຂໍ້ມູນ ມີພຽງແຕ່ຂໍ້ມູນຂອງບ້ານໜອງແກ ຊຶ່ງໄດ້ຈາກພະນັກງານຂອງເມືອງ ແລະບ້ານຫຼັກ19 ຈາກບໍລິສັດເຢົາຕຽງ.

ການຈ່າຍຄ່າຊົດເຊີຍໃນບ້ານກໍລະນີສຶກສາທັງ 6 ບ້ານ ຂາດລະບົບ ແລະ ກົດເກນມາດຕະການທີ່ແນ່ນອນ. ບາງບໍລິສັດຈ່າຍຄ່າຊົດເຊີຍໃຫ້ສະເພາະຜົນຜະລິດທີ່ເສຍຫາຍ, ບາງບໍລິສັດຄິດໄລ່ສະເລ່ຍ, ຕົວຢ່າງໃນບ້ານຫຼັກ 19 ຢູ່ທີ່ລາຄາ 1,200,000 ກີບຕໍ່ເຮັກຕາ ແລະ ບ້ານໜອງແກຢູ່ທີ່ລາຄາ 1,445,000 ກີບເຮັກຕາ. ເມື່ອຄິດສະເລ່ຍຕໍ່ຄົວເຮືອນຂອງທັງ 2 ບ້ານແລ້ວມີຄ່າໃກ້ຄຽງກັນ ຄືປະມານ 1,500,000 ກີບຕໍ່ຄົວເຮືອນ. ສ່ວນອີກ 4 ບ້ານທີ່ເຫຼືອ ຊາວບ້ານສ່ວນໃຫຍ່ບໍ່ໄດ້ຮັບການຊົດເຊີຍ. ສຳລັບລາຍຮັບທີ່ໄດ້ຮັບການຊົດເຊີຍ ບໍລິສັດປະເມີນຄ່າຊົດເຊີຍສະເລ່ຍ 500,000 ຫາ 1,000,000 ກີບຕໍ່ເຮັກຕາ. ບາງລາຍໄດ້ຮັບການຊົດເຊີຍ 200,000 ກ່ວາກີບ ຕໍ່ເຮັກຕາ. ອັດຕາຄ່າຊົດເຊີຍດັ່ງກ່າວຕ່ຳກ່ວາມູນຄ່າຂອງຜົນຜະລິດຕໍ່ເຮັກຕາໃນ 1 ປີ ຈຶ່ງເຮັດໃຫ້ຊາວບ້ານບໍ່ພໍທີ່ຈະເບິ່ງແຍ່ງຄອບຄົວໜຶ່ງໆໃຫ້ຢູ່ລອດໃນໜຶ່ງເດືອນດ້ວຍຊ້ຳໃນກໍລະນີທີ່ຊາວບ້ານສູນເສຍທີ່ດິນທັງໝົດ.

### ✱ ການດຳລົງຊີວິດ ແລະ ລະບົບສິດໃນທີ່ດິນກ່ອນຍຸກຢາງພາລາ

ກ່ອນການເຂົ້າມາຂອງອຸດສາກະກຳສວນຢາງພາລາ ປະຊາຊົນດຳລົງຊີວິດດ້ວຍການຜະລິດກະສິກຳ ແລະ ການເກັບຫາເຄື່ອງປ່າຂອງດົງ. ລະບົບການຜະລິດກະສິກຳທີ່ສຳຄັນໄດ້ແກ່:

ເຮັດນາ, ເຮັດສວນ ແລະ ລ້ຽງສັດ. ປະຊາຊົນສ່ວນໃຫຍ່ຈະປູກເຂົ້າເພື່ອບໍລິໂພກເມື່ອເຫຼືອຈຶ່ງຂາຍ ແລະ ເຮັດສວນປູກພືດເສດຖະກິດຫຼາຍຊະນິດເຊັ່ນ: ກາເຟ, ໝາກນັດ, ກ້ວຍ, ຖົ່ວດິນ,ໝາກແໜ່ງ ໝາກຫຸ່ງເທບ, ຖົ່ວລຽນ, ເພື່ອຂາຍເປັນລາຍໄດ້ຂອງຄອບຄົວ. ໃນເມືອງບາຈຽງນັ້ນມີເນື້ອທີ່ດິນຈຳກັດກ່ວາເມືອງເລົ່າງາມ ເພາະສະພາບພື້ນທີ່ບໍ່ເໝາະສົມກັບການເຮັດນາ ແຕ່ສາມາດສຳລັບການສັດລ້ຽງເຊັ່ນ: ງົວ, ຄວາຍ, ແບ້ ແລະ ໝູ, ປະຊາຊົນມັກລ້ຽງໄວ້ເພື່ອຂາຍເມື່ອຍາມຈຳເປັນຕ້ອງໃຊ້ເງິນເປັນກ້ອນ.

ກ່ອນການເຂົ້າມາ ຂອງການສຳປະທານທີ່ດິນປູກຢາງພາລານັ້ນ, ປະມານ 80% ຂອງຄົວເຮືອນໃນພື້ນທີ່ສຶກສາປູກເຂົ້າໄດ້ພໍກິນຕະຫຼອດປີ. ສຳລັບຄົວເຮືອນທີ່ເຂົ້າບໍ່ພໍກິນຕະຫຼອດທັງປີ ມັກຂາດເຂົ້າໃນລະຫວ່າງເດືອນມີນາຫາເດືອນສິງຫາ ຊຶ່ງປະຊາຊົນສາມາດເກັບກ່ຽວຜົນຜະລິດຈາກພືດອື່ນໆທີ່ປູກໄວ້ໃນສວນເພື່ອອອກຂາຍ. ການສູນເສຍສວນປູກພືດ ຫຼື ຕົ້ນໄມ້ໃຫ້ໝາກໂດຍສະເພາະຢ່າງຍິ່ງໃນບ້ານທີ່ບໍ່ມີນາ ຫຼື ມີນາໜ້ອຍ ເຊັ່ນໃນເມືອງບາຈຽງ ເຮັດໃຫ້ຊາວບ້ານຢູ່ໃນພາວະສ່ຽງຕໍ່ການຂາດເຂົ້າ ກິນຕະຫຼອດປີ. ການສູນເສຍທີ່ດິນສວນ ຈຶ່ງ ເທົ່າກັບການເພີ່ມພາວະຄວາມສ່ຽງຫຼາຍຍິ່ງຂຶ້ນ. ທາງອອກທາງດຽວໃນການຊົດເຊີຍຄວາມສ່ຽງ ຈຶ່ງໄດ້ແກ່ການຮັບຈ້າງແຮງງານກັບສວນຢາງພາລາ. ແຕ່ໃນທາງປະຕິບັດກັບພົບວ່າ ໂອກາດການຈ້າງ ງານນັ້ນບໍ່ໄດ້ມີສຳໝໍ່າສະເໝີໃນທຸກບ້ານ ແລະ ວຽກໃນສວນຢາງກໍ່ບໍ່ໄດ້ມີໃຫ້ຊາວບ້ານຄົບທຸກ ຄົນທີ່ສູນເສຍທີ່ດິນໃຫ້ກັບບໍລິສັດ. ນອກຈາກນັ້ນຄ່າແຮງກໍ່ຕໍ່າ ແລະມັກຈ່າຍຊ້າໃນຂະນະທີ່ລາຄາເຂົ້າກັບເພີ່ມສູງຂຶ້ນຢູ່ຕະຫຼອດເວລາ.

**✸ ການປ່ຽນແປງຮູບແບບການດຳລົງຊີວິດ ຂອງປະຊາຊົນ, ຫຼັງການເຂົ້າມາຂອງອຸດສາຫະກຳສວນ ຢາງພາລາ**

***ກາເຟ, ທີ່ເປັນທ່າແຮງໜຶ່ງຂອງສິນຄ້າເພື່ອສົ່ງອອກໄດ້ເຂົ້າມາຢູ່ໃນພາວະທີ່ບໍ່ມີຄວາມໝັ້ນຄົງ***

ບ້ານກໍລະນີສຶກສາ 3 ແຫ່ງ ຄື: ບ້ານຫຼັກ 19, ບ້ານອຸດົມສຸກ ແລະ ບ້ານໜອງແກ ມີລາຍຮັບຫຼັກຈາກກາເຟ ກ່ອນການເຂົ້າມາຂອງສວນຢາງພາລາ. ລາຄາກາເຟສູງຂຶ້ນສາມາດສ້າງລາຍຮັບໃຫ້ຊາວບ້ານຢ່າງເປັນກອບເປັນກຳເຊັ່ນ: ໃນປີ 2005 ຊາວບ້ານຫຼັກ 19 ມີລາຍຮັບຈາກກາເຟສູງເຖິງ 5,147,000 ກີບຕໍ່ຄົວເຮືອນ. ຜົນຜະລິດກາເຟໃນ 3 ບ້ານຢູ່ລະຫວ່າງ 2.5-3 ກິໂລກຼາມຕໍ່ຕົ້ນ ຫຼື 1-1.5 ໂຕນຕໍ່ເຮັກຕາ. ໂດຍທັງ 3 ບ້ານ ດັ່ງກ່າວຕ່າງສູນເສຍສວນກາເຟໃຫ້ ກັບບໍລິສັດປູກຢາງພາລາ. ສຳລັບບ້ານຫຼັກ19, ຊຶ່ງສູນເສຍສວນກາເຟທັງໝົດໃຫ້ກັບບໍລິສັດ ປູກຢາງພາລານັ້ນ. ຕ້ອງສູນເສຍໂອກາດສຳລັບລາຍຮັບກ້ອນໃຫຍ່ຈາກກາເຟ ທີ່ມີລາຄາເພີ່ມສູງ ຂຶ້ນເຖິງ 18,000 ຫາ 25,000 ກີບຕໍ່ກິໂລກຼາມ ໃນປີ 2007-2008.

ຊາວບ້ານຍັງມີລາຍໄດ້ຈາກພືດເສດຖະກິດຊະນິດອື່ນໆ ທີ່ປູກໃນພື້ນທີ່ກໍລະນີສຶກສາເຊັ່ນ: ໝາກແໜ່ງ, ກ້ວຍ, ຖົ່ວລຽນ ແລະ ໄມ້ໃຫ້ໝາກຊະນິດຕ່າງໆ. ການປູກພືດທີ່ຫຼາກຫຼາຍ ຂອງຄົວເຮືອນນັ້ນ, ນັບເປັນຍຸດທະສາດສຳຄັນໃນການຜະລິດກະສິກຳທີ່ຢູ່ເຂດດິນພູໄຟເກົ່າ ທີ່ເປັນດິນທີ່ມີຄຸນນະພາບດີ ເພື່ອຫຼຸດຄວາມສ່ຽງຕໍ່ການຜັນແປ ຂອງຕະຫຼາດ ແລະ ທາງເລືອກທີ່ຫຼາກຫຼາຍໄດ້ຊ່ວຍກະຈາຍລາຍຮັບຂອງຄົວເຮືອນຢ່າງສະໝ່ຳ ສະເໝີຕະຫຼອດທັງປີ. ການສູນເສຍລາຍຮັບອັນຫຼາກຫຼາຍເຫຼົ່ານີ້ ເປັນປັດໄຈຫຼັກທີ່ກໍ່ໃຫ້ເກີດຄວາມບໍ່ໝັ້ນຄົງທາງເສດຖະກິດ, ໃນບັນດາຊາວບ້ານທີ່ບໍ່ມີທີ່ດິນເຫຼົ່ານີ້.

ເຖິງແມ່ນວ່າຊາວບ້ານ ຈະປູກພືດເສດຖະກິດຫຼາກຫຼາຍຊະນິດ, ແຕ່ກໍ່ຍັງບໍ່ຖິ້ມການປູກເຂົ້າ. ຊາວບ້ານໃນພື້ນທີ່ສຶກສານັ້ນເຄີຍຜະລິດເຂົ້າເປັນພືດສຳຄັນກ່ອນສວນຢາງພາລາ ຈະເຂົ້າມາ 90% ຂອງຄົວເຮືອນທີ່ໃຫ້ສຳພາດເຄີຍເປັນຜູ້ຜະລິດເຂົ້າ. ມີບາງຈຳນວນຄົວເຮືອນເຄີຍເປັນຜູ້ເຄີຍຂາຍເຂົ້າດ້ວຍ. ຜົນຜະລິດເຂົ້າລວມທັງໝົດທີ່ຂາຍໄດ້ ຫຼຸດລົງຈາກ 64 ໂຕນໃນປີ 2003 ເຫຼືອ 23 ໂຕນໃນປີ 2007. ລາຍໄດ້ສະເລ່ຍຂອງຄົວເຮືອນ ທີ່ຂາຍເຂົ້າຢູ່ທີ່ 1,800,000 ກີບຕໍ່ປີ ເຖິງວ່າຕົວເລກລາຍໄດ້ຈະບໍ່ຫຼາຍປານໃດ ແຕ່ກໍ່ເປັນ ລາຍຮັບເສີມຂອງຄົວເຮືອນ.

ຜົຣຜະລິດເຂົ້າລວມທັງ 6 ບ້ານໄດ້ຫຼຸດຈຳນວນລົງ. ໃຣປີ 2003 ປະມານ 80 ສ່ວນຮ້ອຍຂອງຈຳນວນຄົວເຮືອນທີ່ໄດ້ສຳພາດມີເຂົ້າພໍກິນ ແຕ່ມາຮອດປີ 2003-2006 ພາຍຫລັງມີການສຳປະທານທີ່ດິນເພື່ປູກຢາງພາລາເຫັນວ່າໄດ້ຫຼຸດລົງຈາກ 367 ໂຕນ ເຫຼືອພຽງ 240 ໂຕນ.
ຕົວເລກດັ່ງກ່າວໄດ້ສະທ້ອນໃຫ້ເຫັນເຖິງຜົນກະທົບຂອງການເສຍເນື້ອທີ່ດິນໃນໄລຍະເບື້ອງຕົ້ນຂອງການສຳປະທານ ແຕ່ໃນປີ 2006-2007 ແມ່ນຈະມີຜົນກະທົບຫລາຍຂຶ້ນເພາະເນື້ອທີ່ດິນສ່ວນໃຫຍ່ແມ່ນຖືກສຳປະທານຫມົດ.
ຕົວເລກຜົນຜະລິດເຂົ້າໄດ້ຫຼຸດລົງເຫຼືອ 1 ໃນ 4 ໃນປີ 2007. ໃນຂະນະທີ່ການຜະລິດເຂົ້າຫຼຸດ ລົງແຕ່ຈຳນວນ ແລະ ມູນຄ່າຂອງເຂົ້າທີ່ຊາວບ້ານຕ້ອງການຊື້ກັບສູງຂຶ້ນ. ເມື່ອທຽບກັບລາຄາໃນຊ່ວງເວລາກ່ອນສຳປະທານທີ່ດິນຊຶ່ງສູງກ່ວາເຖິງ 140% ຈາກຕົວເລກໂດນສະເລັ່ຍຄ່າໃຊ້ຈ່າຍໃນການຊື້ເຂົ້າຂອງ ຄົວ ເຮືອນສະເລ່ຍຢູ່ທີ່ 638,000 ກີບຕໍ່ປີ ໃນປີ 2003 ແລະສູງຂຶ້ນເປັນ 1,523,000 ກີບໃນປີ 2007,
ເມື່ອພິຈາລະນາຕົວເລກຄ່າໃຊ້ຈ່າຍຂອງຄົວເຮືອນບໍ່ມີທີ່ດິນໃນບ້ານຫຼັກ 19 ພົບວ່າ ຄ່າໃຊ້ຈ່າຍສະເລັ່ຍສຳລັບຊື້ເຂົ້າສູງຂຶ້ນເປັນ 4,647,000 ກີບຕໍ່ປີ. ໃນບ້ານອຸດົມສຸກ ຄ່າໃຊ້ຈ່າຍໃນການຊື້ເຂົ້າໃນຄົວ ເຮືອນທີ່ບໍ່ມີທີ່ດິນສະເລ່ຍຢູ່ທີ່ 5.9 ລ້ານກີບຕໍ່ປີ.

ຄວາມສ່ຽງໃນເລື່ອງເຂົ້ານັ້ນມີລະດັບທີ່ບໍ່ສະໝໍ່າສະເໝີຕະຫຼອດທັງປີ ໃນຊ່ວງກ່ອນສໍາປະທານປູກຢາງພາລາ, ເຂົ້າຈະຂາດແຄນໃນໝູ່ຄົວເຮືອນທຸກຍາກຕັ້ງແຕ່ເດືອນມີນາ ແລະ ສູງຂຶ້ນເລື້ອຍໆໄປຈົນເຖິງກໍລະກົດ. ວິກິດຂອງການຂາດແຄນເຂົ້າໃນຄົວເຮືອນທີ່ສໍາຫຼວດເຄີຍຢູ່ໃນຊ່ວງເດືອນກັນຍາ-ຕຸລາ ກ່ອນໜ້າລະດູການເກັບກ່ຽວເລັກໜ້ອຍ. ການປູກເຂົ້າເຊິ່ງໄລຍະເວລາເກັບກູ້ທີ່ຫ່າງກັນ ສອງ-ສາມເດືອນ ຊ່ວຍໃນການຫຼຸດພາວະຄວາມບໍ່ໝັ້ນຄົງໃນເລື່ອງເຂົ້າໄດ້. ແຕ່ເມື່ອສໍາປະທານປູກຢາງພາລາເຂົ້າມາ ເນື້ອທີ່ປູກເຂົ້າຫຼຸດຈໍານວນລົງ. ຄວາມບໍ່ໝັ້ນຄົງເລື່ອງເຂົ້າໄດ້ສູງຂຶ້ນຕະຫຼອດທ້າຍປີ 2007 ເມື່ອພິຈາລະນາຈາກຂໍ້ມູນຕົວຈິງທີ່ວ່າພາວະການສູນເສຍທີ່ດິນດໍາເນີນໄປຕະຫຼອດປີ 2007 ຈໍາ ນວນຄົວເຮືອນທີ່ມີເຂົ້າບໍ່ພໍກິນຕະຫຼອດປີ 2008 ອາດຈະສູງຫຼາຍຂຶ້ນກ່ວາປີ 2007 ອີກດ້ວຍ.

ຕົວເລກການປະເມີນຄ່າໃຊ້ຈ່າຍພື້ນຖານໂດຍສະເລ່ຍຂອງຄົວເຮືອນໃນປີກ່ອນ ແລະ ຫຼັງສໍາປະທານ ຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການຊື້ເຂົ້າ ແລະ ອາຫານ ເຊິ່ງສູງກ່ວາການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການດໍາລົງຊີວິດອື່ນໆ. ເມື່ອກ່ອນນັ້ນຄ່າໃຊ້ຈ່າຍກ່ຽວກັບອາຫານມັກເປັນລາຍການກ່ຽວກັບປະເພດອາຫານປະເພດແປ້ງນົວ, ນໍ້າປາ, ຊີ້ນ ແຕ່ປະຈຸບັນການຊື້ອາຫານໃນຕະຫຼາດໄດ້ລວມເອົາເຂົ້າ ແລະ ຜັກເຂົ້າໄປນໍາ.

*ອາຫານ ແລະ ຊັບພະຍາກອນທີ່ໄດ້ຈາກປ່າໄມ້ທໍາມະຊາດ ແລະ ຫ້ວຍນໍ້າລໍາເຊ.*

ການສູນເສຍບ່ອນທໍາມາຫາກິນ ແລະ ພື້ນທີ່ສາທາລະນະ ສ່ວນລວມໄດ້ກໍ່ໃຫ້ເກີດການປ່ຽນແປງຮູບແບບໃນການດໍາລົງຊີວິດຂອງຊາວບ້ານ. ໃນພື້ນທີ່ສຶກສາກ່ອນທີ່ການສໍາປະທານທີ່ດິນ ຈະເຂົ້າມານັ້ນທີ່ດິນສາທາລະນະສ່ວນລວມ ແລະ ທີ່ດິນສ່ວນບຸກຄົນໂດຍສ່ວນໃຫຍ່ແລ້ວເປັນແຫຼ່ງຊັບພະ ຍາກອນທໍາມະຊາດທີ່ສໍາຄັນທີ່ໃຊ້ປະໂຫຍດ ໃນການດໍາລົງຊີວິດປະຈໍາວັນ ຂອງຊາວບ້ານ. ຊັບພະຍາກອນເຫຼົ່ານີ້ຮຽກວ່າເປັນເຄື່ອງປ່າຂອງດົງ ຊຶ່ງໃນຄວາມເປັນຈິງແລ້ວບໍ່ໄດ້ຈໍາກັດພຽງຊັບພະຍາກອນຈາກໃນປ່າໄມ້ທໍາມະຊາດເທົ່ານັ້ນ. ແຕ່ຍັງລວມເຖິງຊັບພະຍາກອນ ຈາກລະບົບນິເວດອື່ນໆດ້ວຍເຊັ່ນ: ຫ້ວຍນໍ້າລໍາເຊ ແລະ ໜອງບຶງ ເປັນຕົ້ນ.

ກ່ອນການສໍາປະທານທີ່ດິນປູກຢາງພາລາຈະເຂົ້າມານັ້ນ ຊາວບ້ານຈາກບ້ານຕ່າງໆ ໄດ້ເກັບເຄື່ອງປ່າຂອງດົງເຊັ່ນ: ເຫັດ, ໜໍ່ໄມ້, ຍອດບຸ່ນ, ສັດຕ່າງໆ, ແມງໄມ້, ປາ, ກຸ້ງ, ຫອຍ ທັງເພື່ອຂາຍ ແລະ ເພື່ອບໍລິໂພກ. ພື້ນທີ່ທີ່ເປັນແຫຼ່ງເຄື່ອງປ່າຂອງດົງທັງ 6 ບ້ານກໍລະນີສຶກສາກ່ອນການເຮັດສວນຢາງພາລາ ສ່ວນຫຼາຍແມ່ນ ຫ້ວຍ/ແຄມຫ້ວຍ, ປ່າເລົ່າ ແລະ ປ່າຊົມໃຊ້. ຜົນຜະລິດຈາກປ່າ ແລະ ຫ້ວຍທີ່ຖືກເກັບເພື່ອຂາຍໄດ້ມີສ່ວນສໍາຄັນໃນການຊ່ວຍເຫຼືອເສດຖະກິດ ຄົວເຮືອນ. ພືດທີ່ສໍາຄັນຄື: ຫຍ້າຄາ, ໂດຍຊາວບ້ານຈະເກັບກ່ຽວຫຍ້າຄາເພື່ອຂາຍເປັນລາຍໄດ້ ທຸກປີ.

ຄົວເຮືອນໜຶ່ງ ໃນບ້ານອຸດົມສຸກເຄີຍຂາຍໄພທຍ້າຄາໄດ້ 5,000,000 ກີບ ຕໍ່ປີ. ສ່ວນລາຍໄດ້ຈາກເຄື່ອງປ່າຂອງດົງອື່ນໆ, ຄົວເຮືອນໜຶ່ງອາດມີລາຍໄດ້ຕັ້ງແຕ່ 1,000,000 - 2,000,000 ກີບຕໍ່ປີ. ລາຍໄດ້ເຫຼົ່ານີ້ ໄດ້ສູນຫາຍໄປຈົນໝົດເມື່ອບໍລິສັດຢາງພາລາໄດ້ນຳທີ່ດິນ ບໍລິເວນນ້ຳ ແລະ ປ່າຕ່າງໆ ໄປຈາກຊາວບ້ານເພື່ອປູກຢາງພາລາ.

ບໍ່ພຽງແຕ່ຜົນໄດ້ທາງເສດຖະກິດຈາກບ່ອນດັ່ງກ່າວຈະຫາຍໄປ ແຕ່ຜົນໄດ້ໃນດ້ານໂພສະນາການ ແລະ ອາຫານທີ່ໄດ້ຈາກຜັກ ແລະ ສະໝຸນໄພ ແລະ ໝໍ່ໄມ້ຕ່າງໆຈາກປ່າທຳມະຊາດກໍ່ຫາຍໄປດ້ວຍ. ແມ່ບ້ານຈາກບ້ານຫູັກ 19 ຫຼາຍຄົນຕ່າງກໍ່ໄດ້ສະທ້ອນເຖິງສະພາບກ່ອນໜ້າທີ່ປ່າໄມ້ທຳມະຊາດຖືກທຳລາຍໄປຈົນຫາເຄື່ອງປ່າຂອງດົງບໍ່ໄດ້ອີກຕໍ່ໄປວ່າ:

*" ເຮົາເຮັດວຽກໃນສວນສຳເລັດແລ້ວ ກໍ່ພາກັນໄປຫາອາຫານໄດ້ພໍກິນ ແລະ ຂາຍ "*

*" ຝາເຮືອນແຕ່ກ່ອນກໍ່ເອົາມາຈັກເອງສານເອງ, ສ້າງບ້ານໄດ້ໜຶ່ງຫຼັງບໍ່ຕ້ອງຊື້ "*

*"ການດຳລົງຊີວິດ ມີຄວາມສະດວກສະບາຍໃຈ ບໍ່ໄດ້ຄິດວ່າຈະບໍ່ມີອັນໃດກິນ"*

*" ແຕ່ກ່ອນຂຶ້ນພູໄປຫາກິນກໍ່ໄດ້ລົງ ມາເປັນກະຕ່າ, ມາປະຈຸບັນຂຶ້ນໄປຫາກໍ່ບໍ່ໄດ້ອັນໃດກັບມາ ບ່ອນກາຍເປັນຂອງບໍລິສັດປູກຢາງພາລາ ໝົດແລ້ວ "*

### *ສະພາບແວດລ້ອມໃນອຸດສາຫະກຳສວນຢາງພາລາ*

ການປູກໄມ້ຊະນິດດຽວ ຫຼື ສວນໄມ້ນັ້ນມີເປົ້າໝາຍດ້ານການຄ້າ ເພື່ອສ້າງທ່າແຮງທາງການຜະລິດສູງສຸດໃນຕົ້ນໄມ້ພຽງຊະນິດດຽວ. ພືດຊະນິດດຽວໃນຕອນດິນຂະໜາດໃຫຍ່, ບໍ່ຕ່າງຈາກທະເລຊາຍເພາະບໍ່ມີພືດອື່ນຂຶ້ນ. ບໍ່ມີອາຫານ ຫຼື ຊັບພະຍາກອນອື່ນໆທີ່ມີໃນປ່າ ທຳມະ ຊາດ. ໃນກໍລະນີຂອງສວນຢາງພາລາໃນລາວ, ຕົ້ນຢາງຈຳນວນ 555 ຕົ້ນໄດ້ຖືກປູກ ຕໍ່ເນື້ອທີ່ 1 ເຮັກຕາ. ແຕ່ລະຕົ້ນເຕີບໃຫຍ່ມາຈາກແນວພັນທີ່ຖືກຄັດເລືອກຢ່າງລະມັດລະວັງ ເພື່ອໃຫ້ໄດ້ນ້ຳຢາງສູງສຸດ.

ໃນຂະນະທີ່ປ່າທຳມະຊາດນັ້ນປະກອບຂຶ້ນດ້ວຍສິ່ງມີຊີວິດຫຼາກຫຼາຍຊະນິດ ແລະ ດ້ວຍຊ່ວງຊີວິດທີ່ແຕກຕ່າງກັນ ເຊິ່ງຕ່າງກໍ່ເພິ່ງພາເຊິ່ງກັນ ແລະ ກັນ ແລະ ໃນສຸດທ້າຍສາມາດຟື້ນສະພາບຂຶ້ນມາເອງໄດ້. ໃນສວນຢາງພາລານັ້ນເລີ່ມຕົ້ນ ແລະ ສິ້ນສຸດໃນແບບແຜນທີ່ແນ່ນອນ ແລະ ຄືກັນພາຍໃຕ້ການຄວບຄຸມຂອງມະນຸດ ແລະ ມີສະພາບຄືກັນກັບພືດອຸດສາຫະກຳ ຫຼາຍກ່ວາທີ່ຈະເປັນປ່າທຳມະຊາດ. ໃນການເລີ່ມຕົ້ນຂອງສວນຢາງພາລາ, ເນື້ອທີ່ທັງໝົດ ຖືກຖາງອອກຈົນໝົດບໍ່ວ່າຈະເປັນຜົນລະປູກ ຫຼື ຕົ້ນໄມ້ໃດກໍ່ຕາມທີ່ຂຶ້ນຢູ່ເທິງໜ້າດິນ. ແນວພັນຈະຖືກເພາະພັນໃນສວນກ້າເບ້ຍ ແລະ ນຳໄປປູກໃນເນື້ອທີ່ທີ່ຖືກບຸກເບີກຈົນປອກໂລ້ນແລ້ວຕົ້ນໄມ້ຈະຖືກບົວລະບັດຮັກສາຕະຫຼອດຊ່ວງທີ່ຍັງນ້ອຍຢູ່. ມີການໃສ່ປຸ໋ຍເພື່ອທົດແທນການສູນເສຍທາດອາຫານໃນ ດິນ

ແລະ ປ້ອງກັນການທຳລາຍຈາກສັດຕູພືດ ແລະແມງໄມ້. ຫຼັງຈາກນັ້ນ ປະມານ 15-25 ປີ ທີ່ໃຫ້ນ້ຳຢາງຕົ້ນຢາງກໍ່ຈະຖືກຕັດລົງເຮັດໃຫ້ດິນຖືກເປີດໂລ່ງເພື່ອປູກຕົ້ນຢາງໃນຮອບໃໝ່.

ເຖິງແມ່ນວ່າຈະບໍ່ມີການເກັບຂໍ້ມູນຢ່າງເປັນລະບົບກ່ຽວກັບສະພາບປ່າໄມ້ທຳມະຊາດ ທີ່ຖືກທຳລາຍ, ເພື່ອຈັດຕັ້ງສວນຢາງພາລາແຕ່ການສຶກສາເລື່ອງການເກັບເຄື່ອງປ່າຂອງດົງໄດ້ຊີ້ໃຫ້ເຫັນວ່າ ປ່າເຫຼົ່ານັ້ນໄດ້ຖືກຖາງຈົນປອກໂລ້ນເພື່ອປູກຢາງພາລາ. ບັນຫາທີ່ຕາມມາຄື ການເຊາະເຈື່ອນ ຂອງໜ້າດິນ. ທັງບໍລິສັດທີ່ປູກຢາງພາລາກໍ່ກ່າວວ່າໄດ້ໃຫ້ຄວາມສຳຄັນກັບບັນຫານີ້ຢ່າງເອົາໃຈໃສ່ ໂດຍຫຼີກລ້ຽງພື້ນທີ່ປ່າແຄມຫ້ວຍ ແລະບໍ່ປູກຢາງໃສ່ພື້ນທີ່ຄ້ອຍຊັນ. ແຕ່ຂໍ້ກ່າວອ້າງເຫຼົ່ານີ້ບໍ່ໄດ້ຮັບການຕິດຕາມກວດກາແຕ່ຢ່າງໃດ. ໃນພື້ນທີ່ຂອງປູກຢາງພາລາ ຂອງບາງບໍລິສັດພົບວ່າມີພື້ນທີ່ຄ້ອຍຊັນກ່ວາ 50% ໄດ້ຖືກຖາງອອກຈົນປອກໂລ້ນ. ເກີດມີບັນຫາດິນເຊາະເຈື່ອນຢ່າງຮຸນແຮງໃນບໍລິເວນເທິງລຳຫ້ວຍ. ສານເຄມີຈາກປຸ໋ຍ ແລະຢາຂ້າຫຍ້າຈາກສວນຢາງພາລາ ໄດ້ໄຫຼລົງສູ່ລຳຫ້ວຍສາຍຕ່າງໆນັບຕັ້ງແຕ່ການສ້າງຕັ້ງສວນພາລາເປັນຕົ້ນມາ. ຊາວບ້ານພົບເຫັນວ່າປາໃນລຳຫ້ວຍເລີ່ມຫຼຸດໜ້ອຍລົງ, ໜອງ ແລະລຳຫ້ວຍ. ບາງແຫ່ງພົບປາເປັນບາດຕາມລຳ ຕົວ, ຊາວບ້ານບໍ່ກ້າຈະດື່ມແລະໃຊ້ນ້ຳໃນລຳຫ້ວຍແຫ່ງນັ້ນອີກ.

**✸ ການຈ້າງແຮງງານ**

ບໍລິສັດປູກຢາງພາລາໄດ້ມີ ການສ້າງວຽກໃຫ້ກັບຊາວບ້ານໃນ ທ້ອງຖິ່ນ. ໃນປີທຳອິດນັ້ນຕ້ອງການແຮງງານຈຳນວນຫຼາຍໃນການກະກຽມພື້ນທີ່, ຂຸດຂຸມ, ປູກ ແລະ ເສຍຫຍ້າ. ວຽກເຫຼົ່ານີ້ຕ້ອງໃຊ້ກຳມະກອນຢ່າງໜ້ອຍ 60-70 ຄົນຕໍ່ເຮັກຕາ, ໃນແຕ່ລະມື້. ແຕ່ໃນປີທີ 2-6 ຄວາມຕ້ອງການແຮງງານຈະຄ່ອຍໆ ຫຼຸດລົງ ຈົນເຖິງເວລາກີດຢາງໄດ້ໃນປີທີ 7 ກໍ່ຈະມີຄວາມຕ້ອງການແຮງງານຈຳນວນຫຼາຍຂຶ້ນອີກ ແຕ່ກໍ່ຍັງບໍ່ຫຼາຍເທົ່າກັບປີທຳອິດ.[1] ເຈົ້າຂອງສວນຢາງພາລາໄດ້ໂຄສະນາວ່າ, ຈະເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ແຕ່ໃນຄວາມເປັນຈິງຊ່ອງວ່າງ ຂອງຄວາມຕ້ອງການແຮງງານທີ່ຍາວນານກ່ວາ 4 ປີເຮັດໃຫ້ຊຸມຊົນ ຕ້ອງຕົກຢູ່ໃນພາວະທີ່ສ່ຽງຕໍ່ຄວາມທຸກ ຍາກຂາດແຄນ.

ສວນຢາງພາລາໄດ້ນຳເຂົ້າແຮງງານຈາກຕ່າງປະເທດ ເຊິ່ງສ່ວນຫລາຍເປັນວິຊາການ ທີ່ຕ້ອງໃຊ້ທັດສະໃນສະຖານທີ່ກ້າແນວພັນຢາງ ແລະເປັນຫົວໜ້າກຳມະກອນ. ຄົນຕ່າງປະເທດດັ່ງ

---

[1] ສູນຄົ້ນຄ້ວາປ່າໄມ້ຂອງສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ຂອງລາວ ໄດ້ປະເມີນແຮງງານທີ່ໃຊ້ສວນຢາງພາລາໃນກະລິກຳລາຍຍ່ອຍໃນພາກເໜືອຂອງລາວວ່າໃນປີທຳອິດນັ້ນມີການໃຊ້ວັນແຮງງານ 400 ວັນ ຕໍ່ຄົນຕໍ່ເຮັກຕາຕໍ່ປີ(ຖ້າມີແຮງງານ 2 ຄົນ ໃຊ້ເວລາເຮັດວຽກ 200 ວັນຕໍ່ເຮັກຕາຕໍ່ປີ) ໂດຍວັນ ແຮງງານຈະຫຼຸດລົງເຫຼືອ 150-200 ວັນ ຕໍ່ຄົນຕໍ່ເຮັກຕາຕໍ່ປີ ໃນປີທີ່ໄດ້ກີດຢາງ.

ກ່າວມີສັດສ່ວນເກີນກ່ວາທີ່ຈຳກັດໄວ້ຕາມກົດໝາຍວ່າ ດ້ວຍການສົ່ງເສີມການລົງທຶນຕ່າງປະເທດ 2004 (10%). ໃນເລື່ອງນີ້ຈຶ່ງມີຄວາມຈຳເປັນທີ່ບໍລິສັດ ຄວນຈະຕ້ອງເພີ່ມການຈ້າງ ແຮງງານຊາວລາວໃຫ້ຫຼາຍຂຶ້ນ ແລະ ຄວນທີ່ຈະເຮັດການຝຶກອົບຮົມໃຫ້ກຳມະກອນລາວ ເພື່ອ ຈະໄດ້ສາມາດເຮັດວຽກແທນທີ່ແຮງງານຕ່າງຊາດໄດ້.

ການຈ້າງແຮງງານໃນສວນຢາງພາລາໃນພື້ນທີ່ສຶກສາແບ່ງອອກເປັນ 3 ປະເພດທີ່ ສຳຄັນ ຊຶ່ງມີລັກສະນະທີ່ແຕກຕ່າງຈາກການຈ້າງແຮງງານຖາວອນ ແລະຊົ່ວຄາວໃນຄວາມເຂົ້າໃຈທົ່ວໄປ ເຊັ່ນ: ກຳມະກອນປະຈຳ, ກຳມະກອນລາຍວັນ ແລະ ກຳມະກອນມອບເໝົາ.

***<u>ກຳມະກອນປະຈຳ</u>*** ວຽກປະຈຳໃນໂຄງການປູກຢາງພາລາແມ່ນ 6 ວັນຕໍ່ອາທິດ, 8 ຊົ່ວ ໂມງຕໍ່ວັນ. ຈ່າຍຄ່າແຮງງານເປັນລາຍເດືອນ. ວຽກປະຈຳປະກອບດ້ວຍ ການເຝົ້າຍາມ, ຂັບລົດ ດຸດ, ສີດຢາຂ້າແມງໄມ້, ໃສ່ຝຸ່ນ ແລະ ກຳຈັດວັດສະພືດ(ຂ້າຫຍ້າ). ອາຍຸຂອງກຳມະກອນປະຈຳ ສະເລ່ຍຢູ່ລະຫວ່າງ 18-40 ປີ. ຜູ້ທີ່ໄດ້ຮັບການຈ້າງງານກ່ອນມັກເປັນຜູ້ທີ່ໄດ້ຮັບຜົນ ກະທົບທີ່ ຫຼາຍທີ່ສຸດຈາກການສູນເສຍທີ່ດິນໃຫ້ກັບບໍລິສັດ. ເມື່ອຄວາມຕ້ອງການ ແຮງງານຫຼຸດລົງຫຼັງ 1-2 ປີທຳອິດ ບໍລິສັດກໍ່ບໍ່ໄດ້ຮັບກຳມະກອນປະຈຳເພີ່ມອີກ ເຊັ່ນ: ໄດ້ແຈ້ງໃຫ້ຊາວບ້ານຮັບຮູ້ວ່າບໍລິສັດ ສາມາດຮັບກຳມະກອນໄດ້ພຽງ 50-60% ຂອງຜູ້ທີ່ບໍ່ມີທີ່ດິນເຫຼືອແລ້ວ.

ແຮງງານຖາວອນນັ້ນເປັນອົງປະກອບສ່ວນໜ້ອຍຂອງແຮງງານທັງໝົດ. ບໍລິສັດໄດ້ຈ້າງ ກຳມະກອນເຕັມເວລາ ໜ້ອຍກ່ວາ 5% ຂອງແຮງງານທັງໝົດ ຊຶ່ງມີຢູ່ປະມານ 1,200. ຄົນຖືກ ຈ້າງໃນຊ່ວງສູງສຸດຂອງປີ ກຳມະກອນຖາວອນບໍ່ໄດ້ຮັບເງິນເດືອນຢ່າງສະໝ່ຳສະເໝີທຸກໆເດືອນ. ກຳມະກອນໃນບໍລິສັດກ່າວ, ເປັນສຽງດຽວກັນວ່າ ຕ່າງກໍ່ບໍ່ຮູ້ລ່ວງໜ້າວ່າຈະໄດ້ເງິນຄ່າຈ້າງເທົ່າໃດ ຈົນກ່ວາຈະໄດ້ຮັບເງິນຄ່າຈ້າງປະຈຳເດືອນ. ການຫຼຸດລົງຂອງເງິນຄ່າຈ້າງໄດ້ສ້າງບັນຫາທີ່ຮຸນແຮງ ຕໍ່ຄົວເຮືອນຫຼາຍ. ຄ່າຈ້າງທີ່ຊາວບ້ານໄດ້ ຮັບຈາກບໍລິສັດນັ້ນ ໄດ້ຫຼຸດລົງມາໂດຍຕະຫຼອດໃນແຕ່ ລະປີ. ໃນ ປີທຳອິດນັ້ນຄ່າແຮງຢູ່ລະຫວ່າງ 600,000 - 800,000 ກີບ ແລະ 1,000,000 ກີບໃນ ບາງເດືອນ, ແຕ່ຫຼັງຈາກນັ້ນເງິນເດືອນກໍ່ຫຼຸດລົງເຫຼືອ 200,000 - 500,000 ກີບ. ເງິນ 200,000 ກີບຕໍ່ເດືອນນັ້ນຊື້ເຂົ້າສານໄດ້ພຽງໜຶ່ງເປົາເທົ່ານັ້ນ ເຮັດໃຫ້ແຮງງານຮັບຈ້າງທີ່ບໍ່ມີທີ່ດິນແລ້ວ ຕ້ອງ ປະສົບຄວາມທຸກຍາກຂາດແຄນຢ່າງໜັກ.

***<u>ກຳມະກອນລາຍວັນ</u>***: ຂໍ້ມູນຈາກການສຳຫຼວດໃນປີ 2007 ພົບວ່າ ແຮງງານລາຍວັນນັ້ນ ມີວຽກເຮັດສະເລ່ຍໜ້ອຍກ່ວາ 1 ໃນ 4 ຂອງເວລາເຮັດວຽກໝົດປີ. ກຳມະກອນໄດ້ຄ່າຈ້າງປະ ມານ 20,000 ກີບຕໍ່ຄົນຕໍ່ວັນ.

***<u>ກຳມະກອນມອບເໝົາ</u>***

ການຈ້າງງານໃນລະບົບມອບເໝົານີ້ ຈະຈ້າງງານເປັນແຕ່ລະຄົວ ເຮືອນ ຫຼື ແຕ່ລະກຸ່ມ. ເຮັດວຽກລັກສະນະເປັນໜ້າວຽກເຊັ່ນ: ການກໍາຈັດວັດສະພືດ(ເສຍຫຍ້າ) ຕໍ່ໜຶ່ງເຮັກຕາ ບໍ່ຈໍາ ກັດ ໄລຍະເວລາ ຫາກມີແຮງງານຫຼາຍຄົນວຽກກໍ່ອາດຈະແລ້ວໄວ. ແຕ່ເມື່ອແບ່ງຄ່າແຮງແລ້ວຄ່າແຮງ ຕໍ່ຄົນກໍ່ຈະຕໍ່າ. ກໍລະນີແຮງງານໃນຄົວເຮືອນດຽວກັນຈະນໍາຄ່າຈ້າງທີ່ ໄດ້ທັງໝົດມາໃຊ້ຈ່າຍພາຍ ໃນຄອບຄົວ.

ນອກຈາກນັ້ນ ບໍລິສັດຍັງມີນະໂຍບາຍໃນການມອບສວນຢາງພາລາ ໃຫ້ກັບຄົວເຮືອນ ທີ່ໄດ້ຮັບຜົນກະທົບຮຸນແຮງ ຈາກການສູນເສຍທີ່ດິນ. ເພື່ອບົວລະບັດຮັກສາໃນຮູບແບບ 1+4. ປະຊາຊົນເປັນພຽງຜູ້ອອກແຮງງານໃນສວນຂອງບໍລິສັດ. ໃນລະບົບນີ້ຄົວເຮືອນອາດຂໍອະນຸຍາດ ປູກພືດສັບຫວ່າງແຖວຢາງພາລາໄດ້ສະເພາະໃນຊ່ວງ 3 ປີທໍາອິດ. ເມື່ອຕົ້ນຢາງສາມາດກີດ ນໍ້າ ຢາງໄດ້ຄົວເຮືອນ ຈະໄດ້ຮັບອະນຸຍາດໃຫ້ກີດຢາງພາຍໃຕ້ລະບົບການແບ່ງປັນຜົນກໍາໄລ,ໂດຍຄົວ ເຮືອນເຫຼົ່ານີ້ຕ້ອງບົວລະບັດຮັກສາຕົ້ນຢາງໃນສ່ວນທີ່ບໍລິສັດມອບໃຫ້ ແລະໄດ້ຮັບຄ່າຈ້າງງານ ຕໍ່ ເຮັກຕາຄືກັນກັບລະບົບມອບເໝົາ. ການແບ່ງປັນຜົນກໍາໄລ ຈາກນໍ້າຢາງລະຫວ່າງຊາວບ້ານ ແລະ ບໍລິສັດຍັງບໍ່ມີການຕົກລົງ ຫຼື ເຮັດສັນຍາເປັນລາຍລັກອັກ ສອນຢ່າງຊັດເຈນເທື່ອ.

ຄົວເຮືອນຂອງ 2 ບ້ານໃນພື້ນທີ່ການສຶກສາທີ່ໄດ້ຮັບມອບໃຫ້ບົວລະບັດສວນຢາງຄື: ບ້ານ ໜອງນໍ້າຂາວໃຫຍ່ມີຈໍານວນວັນເຮັດວຽກ 33 ວັນຕໍ່ປີຕໍ່ຄົວເຮືອນ. ລາຍຮັບສະເລ່ຍ 690,000 ກີບຕໍ່ຄົວເຮືອນຕໍ່ປີ. ໃນບ້ານວັງຄະນານຄືພຽງ 15 ວັນຕໍ່ປີຕໍ່ຄົວເຮືອນ, ລາຍຮັບ ລວມສະເລ່ຍ 410,000 ກີບຕໍ່ຄົວເຮືອນຕໍ່ປີ. ລາຍໄດ້ທັງໝົດຖືກນໍາມາໃຊ້ຈ່າຍພາຍໃນຄົວ ເຮືອນ. ຊາວບ້ານ ເຫັນວ່າລາຍໄດ້ໜ້ອຍ ແລະ ບໍ່ມີວຽກພຽງພໍເຮັດໃຫ້ເກີດບັນຫາຄວາມທຸກຍາກ ຫຼາຍຂຶ້ນ. ການ ຂາດແຄນທີ່ດິນທໍາກິນກາຍເປັນບັນຫາໃຫຍ່ທີ່ສຸດໃນທັດສະນະຂອງຊາວບ້ານ ເພາະໂຄງການ ປູກຢາງພາລາບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຊາວບ້ານໄດ້ ເຖິງ ແມ່ນວ່າຈະມີ ການຈ້າງງານເພີ່ມຂຶ້ນກ່ວາທີ່ເປັນຢູ່ກໍ່ຕາມ.

ຖ້າສົມທຽບນະໂຍບາຍໃນຫວຽດນາມນັ້ນ ມີການກໍານົດຄ່າແຮງງານຂັ້ນຕໍ່າສຸດຕາມເຂດ ແຕ່ໃນລາວນັ້ນບໍ່ມີ ຊຶ່ງໝາຍ ຄວາມວ່າບໍລິສັດສາມາດຕັ້ງອັດຕາຄ່າແຮງງານຕໍ່ເດືອນເອົາເອງໄດ້. ໃນຫວຽດນາມ, ກົດໝາຍກໍານົດວ່າຄ່າແຮງທັງໝົດຂອງບໍລິສັດຕ້ອງມີສັດສ່ວນ 40% ຂອງກໍາໄລ ສຸດທິ. ຈາກ ລາຍງານສຶກສາຄວາມເປັນໄປໄດ້ໃນການລົງທຶນຂອງບໍລິສັດຢູ່ລາວ ໄດ້ປະເມີນຕົ້ນ ທຶນຄ່າ ແຮງງານຂອງໂຄງການໄວ້ປະມານແຕ່ 1% ຂອງກໍາໄລ. ນອກຈາກນັ້ນກໍາມະກອນທີ່ເຮັດ ວຽກ ຢູ່ໃນໂຄງການ ເຖິງວ່າຜູ້ທີ່ເຮັດວຽກປະຈໍາຈະມີຄວາມໝັ້ນຄົງໃນເລື່ອງວຽກຫຼາຍກ່ວາ ແຮງ ງານປະເພດອື່ນໆ ແຕ່ບໍລິສັດຍັງບໍ່ເຮັດສັນຍາການຈ້າງງານຢ່າງເປັນລາຍລັກອັກສອນກັບກໍາມະ ກອນເຫຼົ່ານັ້ນ.

✸ ຍຸດທະສາດການປັບຕົວ

ປະຊາຊົນໃນພື້ນທີ່ສຶກສາທັງ 6 ບ້ານ ຕ້ອງປ່ຽນແປງຮູບແບບການດຳລົງຊີວິດ ຢ່າງກະທັນຫັນ ຈາກການສູນເສຍທີ່ດິນທຳກິນໃຫ້ກັບສວນຢາງພາລາ. ຈາກການເປັນຊາວໄຮ່ຊາວນາໄປເປັນແຮງ ງານຮັບຈ້າງນັ້ນ ສ່ວນໃຫຍ່ແລ້ວບໍ່ສາມາດປັບຕົວໃນການດຳລົງຊີວິດໄດ້ ເພາະນອກຈາກ ຊີວິດຄວາມເປັນຢູ່ທີ່ບໍ່ຄຸ້ນເຄີຍແລ້ວ ຄອບຄົວຍັງຕ້ອງປະສົບກັບຄວາມທຸກຍາກຂາດແຄນຫຼາຍ ກ່ວາເກົ່າຈາກພາວະຂາດແຄນເຂົ້າ ແລະ ຄ່າຈ້າງແຮງງານທີ່ບໍ່ພຽງພໍໃນການດຳລົງຊີບ. ມີປະຊາຊົນຈຳນວນໜ້ອຍໜຶ່ງທີ່ພໍຈະປັບຕົວໄດ້ຢູ່ ເນື່ອງຈາກ ປະຊາຊົນກຸ່ມເລົ່ານີ້ເປັນຄອບຄົວທີ່ມີແຮງງານຫຼາຍຄົນ ເຮັດໃຫ້ມີລາຍຮັບຈາກການຮັບຈ້າງແຮງງານພຽງພໍກັບຄ່າໃຊ້ຈ່າຍ ຫຼື ຍັງມີເນື້ອທີ່ດິນກະສິກຳເຫຼືອຢູ່.

ປະຊາຊົນທີ່ບໍ່ມີທີ່ດິນທຳກິນ ປັບຕົວດ້ວຍການເຂົ້າເຮັດວຽກເປັນແຮງງານຮັບຈ້າງ, ຊຶ່ງມີທັງການເຮັດວຽກຮັບຈ້າງໃນສວນຢາງພາລາພຽງຢ່າງດຽວ ຫຼື ຮັບຈ້າງແຮງງານອື່ນໆໃນທ້ອງຖິ່ນ ແລະສ່ວນໜຶ່ງກໍ່ປູກເຂົ້າ ຫຼື ພືດອື່ນໆສັບຫວ່າງແຖວຢາງພາລາ. ແຕ່ປະຊາຊົນອີກສ່ວນໜຶ່ງເລືອກທີ່ຈະບໍ່ເຂົ້າໄປເຮັດວຽກນຳສວນຢາງພາລາ. ໂດຍຊາວບ້ານໄດ້ຂໍບໍລິສັດເຂົ້າໄປປູກເຂົ້າ ຫຼື ພືດອື່ນໆ ສັບຫວ່າງສວນຢາງ ຫຼື ພະຍາຍາມຫາທີ່ດິນແຫ່ງໃໝ່ເພື່ອປູກເຂົ້າ ແລະ ສ່ວນໜຶ່ງກໍ່ໄປຮັບຈ້າງແຮງງານອື່ນໆ. ບາງບ້ານກໍ່ປ່ຽນອາຊີບໄປເຮັດອາຊີບອື່ນໆເຊັ່ນ: ບ້ານ ຫຼັກ 19 ຫັນໄປຕີພ້າເປັນອາຊີບຫຼັກແທນ.

ສຳລັບປະຊາຊົນກຸ່ມທີ່ຍັງມີທີ່ດິນເຫຼືອຢູ່, ກຸ່ມທີ່ເຫຼືອທີ່ດິນຢູ່ໜ້ອຍຈະເຂົ້າເຮັດວຽກຮັບຈ້າງແຮງງານກັບສວນຢາງພາລາຄຽງຄູ່ກັບການເຮັດໄຮ່. ສຳລັບກຸ່ມທີ່ຍັງເຫຼືອທີ່ດິນສ່ວນໃຫຍ່ຍັງຄົງເຮດສວນ, ເຮັດນາເປັນອາຊີບຫຼັກຄືເກົ່າ. ເມື່ອວ່າງວຽກຈາກສວນ ແລະ ນາ, ຈຶ່ງໄປຮັບຈ້າງແຮງງານກັບສວນຢາງພາລາ.

ການປັບຕົວໄດ້ຫຼາຍ ຫຼື ໜ້ອຍ ຂອງປະຊາຊົນນັ້ນ ຂຶ້ນຢູ່ກັບເງື່ອນໄຂໃນເລື່ອງທີ່ດິນ ແລະແຮງງານ. ບ່ອນໃດມີທີ່ດິນເຫຼືອຢູ່ພຽງພໍຈະຊ່ວຍໃຫ້ປະຊາຊົນ, ສາມາດປັບຕົວໃນການດຳລົງຊີວິດໄດ້ຫຼາຍກ່ວາປະຊາຊົນ ທີ່ສູນເສຍທີ່ດິນໄປທັງໝົດ. ດັ່ງຈະເຫັນໄດ້ຈາກການທີ່ປະຊາຊົນໃນບ້ານກໍລະນີສຶກສາທີ່ເມືອງບາຈຽງ ມີເນື້ອທີ່ດິນນາລວມກັນພຽງ 4% ນ້ອຍກ່ວາບ້ານກໍລະນີສຶກສາທີ່ເມືອງເລົ່າງາມ. ຊຶ່ງມີເນື້ອທີ່ດິນນາລວມກັນ 29% ໃນເມື່ອຕ້ອງສູນເສຍທີ່ດິນໄປທັງໝົດ ຈຶ່ງກະທົບ ຕໍ່ຊີວິດການເປັນຢູ່ຫຼາຍກ່ວາ.

ປະຊາຊົນທີ່ບໍ່ມີທີ່ດິນພະຍາຍາມຫາທີ່ດິນຕອນໃໝ່ເພື່ອປູກເຂົ້າ ສ່ວນໃຫຍ່ຈະເຂົ້າໄປປູກພືດສັບຫວ່າງສວນຢາງພາລາເຊິ່ງມີໂອກາດປູກໃນໄລຍະສັ້ນເທົ່ານັ້ນ.

ປະຈຸບັນຮົ່ມເງົາຂອງຕົ້ນຢາງໄດ້ປົກຄູມພື້ນທີ່ສວນຢາງແລ້ວ ສະນັ້ນຊາວບ້ານຈຶ່ງຕ້ອງຊອກບຸກເບີກເນື້ອທີ່ ຫຼື ເຊົ່າດິນຂອງຍາດຕິພີ່ນ້ອງໃນບ້ານໃກ້ຄຽງ, ຊຶ່ງເຫັນຫຼາຍທີ່ບ້ານວັງຄະນານ ຫຼື ບາງລາຍກໍ່ໄປບຸກເບີກນາຕອນໃໝ່. ແຕ່ໃນບ້ານສຶກສາທີ່ເມືອງບາຈຽງນັ້ນ ປະຊາຊົນບໍ່ສາມາດຫາທີ່ດິນຕອນໃໝ່ໄດ້ ເພາະທີ່ດິນຂອງທຸກບ້ານຕ່າງກໍ່ຖືກສຳປະທານທີ່ດິນໄປໝົດແລ້ວ, ຄົນເຫຼົ່ານີ້ຈຳເປັນຕ້ອງເຂົ້າເຮັດວຽກຮັບຈ້າງແຮງງານກັບສວນຢາງພາລາແຕ່ພຽງຢ່າງດຽວ.

## <u>ພາກທີ IV</u>: ບົດວິເຄາະ ແລະ ຂໍ້ສະເໜີແນະ

ພາຍໃຕ້ນະໂຍບາຍຂອງລັດທີ່ສະໜັບສະໜູນໃຫ້ບໍລິສັດເອກະຊົນເຂົ້າມາລົງທຶນ ໂດຍການໃຫ້ສຳປະທານທີ່ດິນຂະໜາດໃຫຍ່ເພື່ອປູກໄມ້ອຸດສາຫະກຳເປັນສິນຄ້າໂດຍສະເພາະແມ່ນການປູກຢາງພາລາເຊິ່ງໄດ້ດຳເນີນໄປຢ່າງກ້ວາງຂວາງໃນທຸກພາກຂອງລາວ. ປະຈຸບັນການປູກຢາງພາລາໄດ້ກວມເອົາ 77%, ໃນພື້ນທີ່ ທີ່ໄດ້ສຳປະທານ ໂດຍພື້ນທີ່ສ່ວນໃຫຍ່ແມ່ນຢູ່ພາກກາງ ແລະ ພາກໃຕ້ຂອງລາວ. ລັດຖະບານລາວມີແຜນຈະເພີ້ມພື້ນທີ່ໃນການປູກຢາງພາລາເຊິ່ງນີ້ ແມ່ນໂຍ ບາຍໜຶ່ງ ໃນການເພີ້ມເນື້ອທີ່ປ່າໄມ້ໃຫ້ໄດ້ 500,000 ເຮັກຕາ ພາຍໃນປີ 2010.

ນັບຕັ້ງແຕ່ປີ 2000 ເປັນຕົ້ນມາການຂະຫຍາຍຕົວຂອງອຸດສາຫະກຳສວນຢາງພາລາກໍ່ໃຫ້ເກີດບັນຫາຢ່າງຫຼວງຫຼາຍເຊັ່ນວ່າ ເກີດມີຂໍ້ຂັດແຍ່ງໃນເລື່ອງທີ່ດິນລະຫວ່າງບໍລິສັດ ແລະ ຊາວກະສິກອນໃນເຂດພື້ນທີ່ສຳປະທານ. ການມອບດິນມອບປ່າພາຍໃຕ້ນະໂຍບາຍຂອງລັດ ເພື່ອໃຫ້ປະຊາຊົນມີແຫຼ່ງທຳມາຫາກິນ ແຕ່ເມື່ອມີບໍລິສັດເຂົ້າມາສຳປະທານທີ່ດິນເພື່ອປູກຢາງພາລາ,ໄດ້ເຮັດໃຫ້ເກີດການສູນເສຍແຫຼ່ງທຳມາຫາກິນຕາມທຳມະຊາດ, ເສຍທີ່ດິນເຮັດກະສິກຳໂດຍແລກປ່ຽນກັບຄ່າຊົດເຊີຍທີ່ໜ້ອຍ ແລະ ບໍ່ພຽງພໍກັບການຄອງຊີບ. ຍ້ອນບັນຫາດັ່ງກ່າວ, ລັດຖະບານລາວຈຶ່ງໄດ້ມີມະຕິຕົກລົງໃຫ້ຢຸດການເຊົ່າ ແລະ ສຳປະທານທີ່ດິນຊົ່ວຄາວ. ກອງປະຊຸມທີ່ດິນທົ່ວປະເທດ ເມື່ອວັນທີ່ 7-8/05/2007 ກໍ່ໄດ້ມີການສຶກສາຂໍ້ມູນ ແລະ ຕິດຕາມການປະເມີນຜົນທີ່ສາເຫດ ແລະ ປັນຫາທີ່ເກີດຂື້ນໃນໄລຍະຜ່ານມາເພື່ອທີ່ຈະໄດ້ນຳມາປັບປຸງນະໂຍບາຍໃຫ້ເໝາະສົມໃນອານາຄົດ.

ຂໍ້ມູນທີ່ຄົ້ນພົບຈາກໂຄງການຄົ້ນຄ້ວາ, ປະເມີນຜົນເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຈາກໂຄງການປູກໄມ້ອຸດສາຫະກຳເປັນສິນຄ້າ ຢູ່ ສປປ ລາວ ແມ່ນການຮ່ວມມື ລະຫວ່າງສູນຄົ້ນຄ້ວາຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະ ຍາກອນທຳມະຊາດ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ສຳນັກງານນາຍົກລັດຖະ ມົນຕີ, ສປປ ລາວ, ມູນລະນິທິຟື້ນຟູຊີວິດ ແລະ ທຳມະຊາດ, ປະເທດໄທ ແລະ ຄະນະສັງຄົມສາດ, ມະຫາວິທະຍາໄລ ຊຽງໃໝ່, ປະເທດໄທ. ຜົນຂອງການສຶກສາໄດ້ຊີ້ໃຫ້ເຫັນເຖິງຜົນກະທົບທີ່ເກີດຈາກການໃຫ້ສຳປະ ທານທີ່ດິນເພື່ອປູກ

ຢາງພາລາໃນຫຼາຍລະດັບດ້ວຍກັນ. ໃນດ້ານຫຼັກ ການແລ້ວເຫັນວ່າ ນະໂຍບາຍການສົ່ງເສີມການປູກຢາງພາລາເປັນສິນຄ້ານັ້ນເປັນແນວທາງທີ່ສອດຄ່ອງກັບນະໂຍບາຍຂອງລັດ ໃນການພັດທະນາທີ່ດິນໃຫ້ເກີດປະໂຫຍດເພື່ອຕອບສະໜອງຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງຊາດ ແລະ ທ້ອງຖິ່ນ ແລະ ການພັດທະນາຊົນນະບົດເພື່ອແກ້ໄຂບັນຫາຄວາມທຸກຍາກໃຫ້ແກ່ປະຊາຊົນ.

ຢ່າງໃດກໍ່ຕາມ ຄວາມພະຍາຍາດັ່ງກ່າວຍັງບໍ່ທັນສາມາດບັນລຸເປົ້າໝາຍດ້ານການພັດທະນາທີ່ໄດ້ວາງໄວ້ເທົ່າທີ່ຄວນ. ໂຄງການຄົ້ນຄ້ວາໄດ້ຄັດເລືອກເອົາໝູ່ບ້ານທີ່ຢູ່ພາຍໃຕ້ໂຄງ ການສຳປະທານຈຳນວນ 6 ບ້ານຄື: ບ້ານອຸດົມສຸກ, ບ້ານໜອງນ້ຳຂາວໃຫຍ່ ແລະ ບ້ານຫຼັກ 19, ເມືອງບາຈຽງ, ແຂວງຈຳປາສັກ; ບ້ານວັງຄະນານ, ບ້ານໜອງລາວເທິງ ແລະ ບ້ານໜອງແກ, ເມືອງເລົ່າງາມ, ແຂວງສາລະວັນ ເພື່ອວິເຄາະປຽບທຽບດ້ານເສດຖະກິດລະຫ່ວາງ ຜົນໄດ້ຮັບທີ່ໄດ້ຈາກການໃຫ້ສຳປະທານທີ່ດິນຂະໜາດໃຫຍ່ ເພື່ອປູກໄມ້ອຸດສາຫະກຳເປັນສິນ ຄ້າຢູ່ໃນບໍລິເວນດິນພູໄຟເກົ່າທີ່ເປັນດິນກະສິກຳທີ່ມີຄຸນນະພາບດີ ແລະ ຫາຍາກ ກັບຜົນກະທົບໃນດ້ານຕ່າງໆ. ໂຄງການໄດ້ສຶກສາຢ່າງລະອຽດເຖິງຂະບວນການປ່ຽນແປງທີ່ເກີດຂຶ້ນໃນໝູ່ບ້ານ ນັບຕັ້ງແຕ່ການເຂົ້າມາຂອງບໍລິສັດເພື່ອສຳປະທານເຊັ່ນ: ການລວບລວມທີ່ດິນ, ການຈ່າຍຄ່າຊົດເຊີຍ ຕະຫລອດຮອດຂະບວນການເຂົ້າເປັນແຮງງານຂອງຊາວບ້ານໃນສວນຢາງພາລາ. ພ້ອມນີ້ໂຄງການວິໄຈໄດ້ຕັ້ງຂໍ້ສົມມຸດໄວ້ 3 ຢ່າງຄື:

1. ການໃຫ້ສຳປະທານທີ່ດິນຂະໜາດໃຫຍ່ ໃຫ້ແກ່ບໍລິສັດເອກະຊົນ, ໃນການປູກໄມ້ເພື່ອການຄ້ານັ້ນ ຈະຍັງເປັນການສ້າງຜົນປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມສູງສຸດໃຫ້ແກ່ປະເທດ ແລະ ທ້ອງຖິ່ນໄດ້ ກໍ່ຕໍ່ເມື່ອມີຂະບວນການທີ່ຫັດກຸມ, ໂປ່ງໃສ, ຈະແຈ້ງ, ເປັນໄປຕາມຂັ້ນຕອນ, ສາມາດກວດກາໄດ້ ແລະ ດຳເນີນການໄປບົນພື້ນຖານຂໍ້ມູນຈາກພື້ນທີ່ທີ່ຖືກຕ້ອງ ແລະ ຮອບດ້ານ ພາຍໃຕ້ການທີ່ມີສ່ວນຮ່ວມຂອງທຸກພາກສ່ວນທັງສູນກາງ, ທ້ອງຖິ່ນ, ບໍລິສັດເອກະຊົນ ແລະ ປະຊາຊົນໃນພື້ນທີ່.

2. ເພື່ອເຮັດໃຫ້ການສົ່ງເສີມອຸດສາຫະກຳຢາງພາລາໃນປະເທດລາວເກີດປະໂຫຍດສູງສຸດ ຕໍ່ປະຊາຊົນ ແລະ ປະເທດຊາດ, ປະຊາຊົນຕ້ອງມີສ່ວນຮ່ວມໃນການພັດທະນາດັ່ງກ່າວ ແລະ ໄດ້ຮັບຜົນປະໂຫຍດຕໍ່ກິດຈະກຳດັ່ງກ່າວຢ່າງເຕັມເມັດເຕັມໜ່ວຍ.

3. ການສະໜັບສະໜູນໃຫ້ປະຊາຊົນຫັນປ່ຽນຈາກການເຮັດການຜະລິດແບບເກົ່າມາເປັນແຮງງານໃນນິຄົມສວນຢາງພາລານັ້ນຈະເຮັດໃຫ້ເກີດປະໂຫຍດກັບປະຊາຊົນໄດ້ ກໍ່ຕໍ່ເມື່ອການປ່ຽນແປງດັ່ງກ່າວເຮັດໃຫ້ປະຊາຊົນມີເສດຖະກິດດີຂຶ້ນກ່ວາເກົ່າ ແລະ ບໍ່ເຮັດໃຫ້ສະພາບທາງນິເວດວິທະຍາ ແລະ ຊັບພະຍາກອນທຳມະຊາດຂອງຊຸມຊົນເຊື່ອມໂຊມ.

ໃນການພິສູດຕາມຂໍ້ສົມມຸດດັ່ງກ່າວ, ໃນເບື້ອງຕົ້ນໂຄງການໄດ້ເນັ້ນໜັກການວິເຄາະ ແລະ ປະເມີນໃນ 3 ດ້ານທີ່ສຳຄັນຄືລັກສະນະການຂະຫຍາຍຕົວຂອງອຸດສາຫະກຳຢາງພາລາໃນ

ລາວກໍ່ຄືຂະບວນການໃຫ້ສຳປະທານທີ່ດິນໃນໂຄງການຢາງພາລາ ແລະ ການປ່ຽນແປງທີ່ເກີດຂຶ້ນໃນເຂດພື້ນທີ່ມີເປົ້າໝາຍຂອງສວນຢາງພາລາ ເຊິ່ງໄດ້ຄົ້ນພົບຂໍ້ມູນທີ່ສຳຄັນເຊັ່ນ:

**1. ການຂະຫຍາຍຕົວຂອງອຸດສາຫະກຳຢາງພາລາໃນລາວມີຫຼາຍລັກສະນະ, ແຕ່ຮູບແບບທີ່ມີຫລາຍທີ່ສຸດ, ພັດເປັນສາເຫດສຳຄັນໃນການສ້າງຂໍ້ຂັດແຍ່ງຫລາຍທີ່ສຸດ**

ການຂະຫຍາຍຕົວຂອງຢາງພາລາໃນລາວນັບນັບຕັ້ງແຕ່ປີ 1990 ເປັນຕົ້ນມາເຫັນ ໄດ້ມີ 4 ລັກ ສະນະຄື:

1.1 ສວນຂະໜາດໃຫຍ່ແມ່ນໄດ້ໃຫ້ຊາວຕ່າງຊາດເຂົ້າມາລົງທຶນເຮັດສຳປະທານ.
1.2 ສວນຂະໜາດໃຫຍ່ ແລະຂະໜາດກາງແມ່ນພາຍໃຕ້ລະບົບເຮັດການຜະລິດແບບມີສັນຍາຜູກພັນ.
1.3 ສວນຂະໜາດກາງ ແລະ ຂະໜາດນ້ອຍແມ່ນຊາວບ້ານເປັນຜູ້ດຳເນີນການປະຕິບັດ.
1.4 ສວນກະເສດຂະໜາດນ້ອຍແມ່ນເປັນຂອງຄອບຄົວຂອງປະຊາຊົນ.

ແຕ່ການດຳເນີນທຸລະກິດຢາງພາລາຂະໜາດໃຫຍ່, ໂດຍມີທຶນຕ່າງຊາດໄດ້ກວມເຖິງ 77 % ເຊິ່ງເຮັດໃຫ້ເກີດມີຜົນກະທົບຫຼາຍຢ່າງ ໂດຍສະເພາະ ບັນຫາຂໍ້ຂັດແຍ່ງໃນທີ່ດິນທຳມາ ຫາກິນຂອງປະຊາຊົນ ທີ່ກໍ່ໃຫ້ເກີດການສູນເສຍທີ່ດິນຂອງຊາວບ້ານຢ່າງກ້ວາງຂວາງ ແລະ ເກີດມີຂໍ້ຂັດແຍ່ງໃນກໍລະນີໃນພື້ນທີ່ທີ່ໄດ້ໄປສຶກສາປະຊາຊົນສ່ວນໃຫຍ່ແມ່ນບໍ່ມີດິນເຮັດການຜະລິດກະສິກຳຍ້ອນໄດ້ເສຍທີ່ດິນທີ່ເຄີຍເຮັດການປູກຝັງ ແລະ ລ້ຽງສັດ ເກືອບໝົດໃຫ້ກັບບໍລິສັດ ປູກຢາງພາລາ. ການເຊົ່າ ແລະ ສຳ ປະທານ ທີ່ດິນຂະໜາດໃຫຍ່ ເພື່ອປູກໄມ້ອຸດສາຫະກຳເປັນສິນຄ້າ, ແມ່ນສ້າງຜົນກະທົບ ກະທົບຫຼາຍທີ່ສຸດ ແລະ ມີສາເຫດທີ່ສຳຄັນຫຼາຍຢ່າງດັ່ງນີ້:

ກ. <u>ການເສຍສິດໃນການນຳໃຊ້ທີ່ດິນຂອງປະຊາຊົນ</u>[2]

ຮູບແບບການເຮັດສວນຢາງພາລາໃນລັກສະນະທີ 2 - 4 ນັ້ນ ສິດທິຂອງການນຳໃຊ້ທີ່ດິນແມ່ນເປັນຂອງເຈົ້າຂອງທີ່ດິນ, ແຕ່ຮູບແບບສວນຢາງພາລາໃນລັກສະນະທີ 1 ອຳນາດໃນການຕັດສິນໃຈ ໃນການລົງທຶນການຜະລິດແມ່ນບໍລິສັດເປັນຜູ້ທີ່ມີສິດ, ການເສຍສິດທິໃນການນຳໃຊ້

[2] ໃນທີ່ນີ້ໝາຍເຖິງການສູນເສຍສິດການເຂົ້າໄປໃຊ້ປະໂຫຍດ ຫຼື ກ່ຽວກັບຜົນຜະລິດໃນທີ່ດິນ(usufruct right) ຊຶ່ງປະຊາຊົນໄດ້ມອບສິດຕາມການມອບດິນ-ມອບປ່າ 80 ສ່ວນຮ້ອຍ ຂອງເນື້ອທີ່ດິນກະສິກຳຂອງຄົວເຮືອນທີ່ຖືກສົ່ງມອບໃຫ້ກັບບໍລິສັດສຳປະທານທີ່ດິນ ໄດ້ຮັບໃບຮັບຮອງສິດການໃຊ້ທີ່ດິນແບບຊົ່ວຄາວ (ໃບຢັ້ງຢືນທີ່ດິນ)

ທີ່ດິນຂອງປະຊາຊົນ ໄດ້ເຮັດໃຫ້ປະຊາຊົນບໍ່ສາມາດທີ່ຈະດຳລົງຊີວິດໃນຖານະຊາວ ກະສິກອນ ໄດ້ອີກຕໍ່ໄປ ເຊິ່ງກົງກັນຂ້າມກັບປະຊາຊົນໃນເຂດພື້ນທີ່ສວນກະເສດຂະໜາດໃຫຍ່ ແລະ ກາງ ພາຍ ໃຕ້ລະບົບການຜະລິດແບບມີສັນຍາຜູກມັດ (ໃນຮູບແບບ 2+3) ແລະ ການລົງທຶນການ ປູກ ຢາງພາລາຂະໜາດກາງ ແລະ ນ້ອຍ ໃນພາກເໜືອຂອງລາວນັ້ນ ເຈົ້າຂອງ ທີ່ດິນຍັງມີສິດນຳໃຊ້ຢູ່ ແລະ ສາມາດພັດທະນາລະບົບການຜະລິດ ເພື່ອລ້ຽງຊີບ ຫລື ເພື່ອການ ຄ້າໄດ້ຢ່າງສະບາຍ. ສິດ ທິການນຳໃຊ້ດິນຂອງການເຮັດການຜະລິດສາມາດເປັນທັງແຮງຈູງໃຈ ໃນການລົງທຶນໃສ່ການຜະ ລິດ ແລະ ເປັນຫຼັກໝັ້ນໃນການດຳລົງຊີວິດທີ່ສຳຄັນ ຂອງຊາວກະສິກອນ. ການສູນເສຍສິດໃນ ການນຳໃຊ້ທີ່ດິນ. ຈຶ່ງກາຍເປັນຈຸດສຳຄັນໜຶ່ງ ທີ່ເຮັດໃຫ້ເກີດຂໍ້ຂັດແຍ່ງ ລະຫວ່າງ ປະຊາຊົນ ແລະ ບໍລິສັດເອກະຊົນປູກຢາງພາລາໃນບາງພື້ນທີ່.

ຂ. <u>ຂະໜາດຂອງການສຳປະທານ</u>

ການສຳປະທານເກືອບທັງໝົດມີຂະໜາດໃຫຍ່ປະມານ 10,000 ເຮັກຕາ. ທີ່ດິນໃນ ສປ ປລາວ. ພື້ນທີ່ສຳລັບການຜະລິດກະສິກຳສ່ວນຫລາຍຈະບໍ່ແມ່ນພື້ນທີ່ກ້ວາງຂວາງ ແລະ ສ່ວນ ຫລາຍຈະບໍ່ເປົ່າຫວ່າງ ຍົກເວັ້ນໃນພື້ນທີ່ເຄີຍມີສົງຄາມເພາະດິນແຖວນັ້ນຍັງມີລະເບີດ ຕົກຄ້າງ ຢູ່ເຊັ່ນ: ຢູ່ເມືອງຕາໂອ້ຍ ແລະ ເມືອງສະມ້ວຍທີ່ເປັນເຂດແດນລະຫວ່າງລາວ-ຫວຽດນາມ ທີ່ມີປະ ຊາກອນໜ້ອຍ. ແຕ່ບໍລິສັດຜູ້ລົງທຶນກໍ່ບໍ່ສົນ ໃຈໃນພື້ນທີ່ດັ່ງກ່າວເນື່ອງຈາກວ່າໄລຍະທາງໄກຈາກ ຕະຫຼາດຫຼາຍ ແລະ ມີອັນຕະລາຍ ຈາກລະເບີດທີ່ຍັງມີຢູ່ຈາກໃນຊ່ວງສົງຄາມ.

## 2. ຂະບວນການໃຫ້ສຳປະທານທີ່ດິນເພື່ອປູກຢາງພາລາຈາກລັດ ຍັງມີຄວາມຊັບຊ້ອນຢູ່, ຂາດ ມາດຕະຖານໃນການຮ່ວມມືກັນ ແລະ ຂາດລະບົບການກວດສອບຄວບຄຸມໃນການດຳເນີນ ການ ຂອງບໍລິສັດສຳປະທານທີ່ເຫມາະສົມ.

ເຖິງວ່າມີການອານຸມັດໃຫ້ບໍລິສັດເອກະຊົນເຂົ້າມາລົງທຶນ ຈະເປັນຍຸດທະສາດທີ່ສຳຄັນໃນ ເບື້ອງຕົ້ນຂອງເສດຖະກິດ ຂອງປະເທດເພື່ອສ້າງແຫຼ່ງໃນການລົງທຶນຈາກຕ່າງປະເທດ.ໃຫ້ເຂົ້າມາ ສຳ ປະທານທີ່ດິນ, ຜ່ານມາການ ດຳເນີນງານດັ່ງກ່າວໄດ້ມີບັນຫາຢູ່ 6 ປະເພດເຊັ່ນ:

2.1 <u>ການຕົກລົງ ແລະ ລົງນາມໃນການໃຫ້ສຳປະທານທີ່ດິນສ່ວນໃຫຍ່ແມ່ນເກີດ ຂຶ້ນ ໂດຍ ບໍ່ມີການສຳຫຼວດຈັດສັນທີ່ດິນກ່ອນ ແລະ ການເຮັດບົດວິພາກທາງເສດຖະກິດ (feasibility study) ມັກເກີດຂຶ້ນພາຍຫຼັງ</u>

ຂໍ້ສຳຄັນຂອງການໃຫ້ສຳປະທານທີ່ດິນນັ້ນຕ້ອງຮູ້ໄດ້ວ່າມີດິນຈຳນວນຫລາຍປານໃດ ທີ່ສາມາດ ໃຫ້ສຳປະທານໄດ້,. ຄະນະກຳມະການລົງທຶນ, ບໍລິສັດຜູ້ຂໍສຳປະທານ ຕະຫຼອດຮອດກະຊວງ ກະ ສິກຳ ແລະ ປ່າໄມ້ທີ່ກ່ຽວຂ້ອງກັບການລົງນາມຕໍ່ການອານຸມັດໃຫ້ສຳປະທານ ກໍ່ບໍ່ມີຂໍ້ມູນ ທີ່ກ່ຽວ ກັບຊັບພະຍາກອນທີ່ດິນ, ທີ່ສາມາດໃຫ້ເຊົ່າໄດ້ກ່ອນທີ່ຈະລົງນາມໃນໃບສັນຍາ. ການລົງນາມໃນ

ສັນຍາ ແມ່ນປາສະຈາກຂໍ້ມູນຮັບຮອງດັ່ງກ່າວ, ເຮັດໃຫ້ເປັນຂໍ້ຜູກມັດທີ່ເຮັດໃຫ້ເຈົ້າໜ້າທີ່ລັດໃນລະດັບທ້ອງຖິ່ນ ຈຳເປັນຕ້ອງໄດ້ຈັດຫາທີ່ດິນໃຫ້ກັບບໍລິສັດຕາມສັນຍາ. ໃນເມື່ອບໍ່ມີດິນເປົ່າວ່າງພຽງພໍຕາມສັນຍາຈຶ່ງຕ້ອງໄດ້ເອົາດິນຂອງປະຊາຊົນມອບໃຫ້ບໍລິສັດ ດັ່ງກໍລະນີທີ່ເກີດຂຶ້ນໃນ ເມືອງບາຈຽງ, ແຂວງຈຳປາສັກທີ່ເຮັດໃຫ້ຊາວບ້ານສູນເສຍທີ່ດິນທຳມາຫາກິນຈຳນວນຫຼາຍ.

ໃນຂະບວນການຕົກລົງອານຸມັດໃຫ້ສຳປະທານທີ່ດິນຂອງຫຼາຍບໍລິສັດຕ່າງປະເທດໃນພື້ນທີ່ທີ່ມີການ ສຶກສາເຫັນໄດ້ວ່າເກີດຂຶ້ນກ່ອນ ການສຶກສາບົດວິພາກທາງເສດຖະກິດສຳເລັດ. ສະແດງວ່າໃນການຕົກລົງ ແລະ ລົງນາມໃຫ້ການສຳປະທານທີ່ດິນນັ້ນ ເກີດຂຶ້ນໂດຍທີ່ຍັງບໍ່ມີການໃຊ້ບົດວິພາກທາງເສດຖະກິດປະກອບໃນການ ພິຈາລະນາການລົງທຶນ.

2.2 <u>ການອານຸມັດໃຫ້ມີການສຳປະທານທີ່ດິນບໍ່ມີການພິຈາລະນາເຖິງຄວາມເໝາະສົມດ້ານ ກາຍະພາບຂອງພື້ນທີ່ຕໍ່ພືດທີ່ປູກ.</u>

ເຖິງວ່າຈະມີການຈັດແບ່ງເຂດພື້ນທີ່ທີ່ເໝາະສົມ ແລະ ບໍ່ເໝາະສົມຕໍ່ການປູກຢາງພາລາແລ້ວທົ່ວປະເທດ, ແຕ່ຂໍ້ມູນຈາກການແບ່ງເຂດພື້ນທີ່( zoning ) ທີ່ມີຢູ່ບໍ່ໄດ້ຖືກນຳມາໃຊ້ພິຈາລະນາໃນການອານຸມັດໃຫ້ສຳປະທານທີ່ດິນເພື່ອປູກຢາງພາລາ. ຜົນກໍ່ຄືມີພື້ນທີ່ ຈຳນວນຫຼາຍທີ່ມີທ່າແຮງໃນການປູກພືດຊະນິດອື່ນ, ແຕ່ຖືກນຳໄປເຮັດເປັນສວນຢາງພາລາຢ່າງກ້ວາງຂວາງ ໂດຍສະເພາະໃນພາກໃຕ້ຂອງລາວ ເປັນຕົ້ນ ພື້ນທີ່ດິນບໍລິເວນແຂວງຈຳປາສັກ ຊຶ່ງມີຄວາມເຫມາະສົມສູງໃນການປູກກາເຟ. ແຕ່ປະຈຸບັນ ທີ່ດິນຈຳນວນບໍລິເວນກ້ວາງທີ່ເປັນດິນກະສິກຳ ທີ່ມີຄຸນນະພາບດີລວມ ທັງສວນກາເຟທີ່ມີຢູ່ໄດ້ກາຍເປັນສວນຢາງພາລາ. ເຫັນໄດ້ ວ່າເປັນການສູນເສຍທາງດ້ານເສດຖະກິດທີ່ສຳຄັນຂອງປະເທດ.

2.3 <u>ຄວາມຊັບຊ້ອນຂອງອຳນາດໃນການອານຸມັດໃຫ້ມີການສຳປະທານທີ່ດິນ</u>

ມີກົດໝາຍຕ່າງໆ ເຊັ່ນ: ກົດໝາຍປ່າໄມ້ໃນປີ 1996, ລະບຽບຂອງກະຊວງກະສິກຳ ແລະ ປ່າໄມ້ປີ1996, ກົດໝາຍທີ່ດິນປີ1997 ແລະ 2003. ນອກຈາກນີ້ໃນດ້ານການປະຕິບັດຕົວຈິງ ຕໍ່ການອານຸມັດໃຫ້ສຳປະທານທີ່ດິນ ຍັງເກີດຂຶ້ນໄດ້ຈາກການຕົກລົງກັນ ລະຫວ່າງ ຫ້ອງການປົກ ຄອງຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນຂອງປະເທດເພື່ອນບ້ານ. ສະພາບຄວາມສັບສົນ ທາງດ້ານກົດໝາຍ ແລະການຂາດຫຼັກການ, ມາດຕາຖານຂອງລະບຽບການໃຫ້ສຳປະທານທີ່ດິນ ທີ່ເປັນເອກະພາບ ກັນ ເຮັດໃຫ້ເກີດບັນຫາການໃຫ້ສຳປະທານທັບຊ້ອນພື້ນທີ່ກັນໃນບາງພື້ນທີ່, ແລະ ເຖິງວ່າປະຈຸບັນຈະມີການສັ່ງລະງັບການໃຫ້ສຳປະທານທີ່ດິນໄວ້ຊົ່ວຄາວ ແລະໄດ້ມີການ ມອບໝາຍໃຫ້ ອົງການຄຸ້ມຄອງທີ່ດິນແຫ່ງຊາດ. ເປັນໜ່ວຍງານຂອງສູນກາງໃນການຈັດສັນທີ່ດິນ ແລະ ໃນການອານຸມັດການສຳປະທານທີ່ດິນແລ້ວ ກໍ່ຍັງບໍ່ມີຄວາມແນ່ນອນວ່າ ຈະມີວິທີການແນວໃດຕໍ່ການແກ້ໄຂບັນຫາ

ດັ່ງກ່າວ. ນອກຈາກນັ້ນຍັງມີບັນຫາໃນການກວດສອບ ແລະ ຄຸ້ມຄອງການໃຫ້ສຳປະທານທີ່ດິນ ໃຫ້ເປັນໄປຕາມຂັ້ນຕອນທີ່ເປັນໄປຕາມມາດຕະຖານ ອັນດຽວກັນໄດ້. ໃນກໍລະນີຂອງບໍລິສັດ ຊຶ່ງດຳເນີນການຢູ່ໃນແຂວງຈຳປາສັກ ແລະ ແຂວງສາລະວັນ, ຄະນະຜູ້ວິໄຈບໍ່ມີຂໍ້ມູນທີ່ແນ່ນອນວ່າ ພວກເຂົາໄດ້ຮັບການອານຸມັດການສຳປະທານໄດ້ແນວໃດ?

2.4 ການຂາດຂໍ້ກຳນົດ, ໃນການປະເມີນຜົນກະທົບ ທາງດ້ານສິ່ງແວດລ້ອມ - ສັງຄົມ ແລະ ການສຶກສາ ເຖິງການຄຸ້ມຄອງທຶນທາງດ້ານເສດຖະກິດ.

ໃນການສຳປະທານທີ່ດິນຂະໜາດໃຫຍ່ໃນລາວ ຕ້ອງໄດ້ມີການເຮັດບົດລາຍງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ (Environmental Impact Assessment) ຫຼື ຜົນກະທົບທາງດ້ານສັງຄົມ (Social Impact assessment) ເພື່ອບໍ່ເຮັດໃຫ້ເກີດມີບັນຫາຕາມມາພາຍຫຼັງ, ຖ້າວ່າບໍ່ມີຫຼັກຄ້ຳປະກັນຕໍ່ໂຄງການຂະໜາດໃຫຍ່ຜູ້ໃດທີ່ຈະເປັນຜູ້ຮັບຜິດຊອບໃນພື້ນທີ່ດັ່ງກ່າວ. ໃນ ກໍລະນີສຶກສາໃນພື້ນທີ່ໜຶ່ງເຫັນໄດ້ວ່າການບຸກເບີກພື້ນທີ່ສຳປະທານເພື່ອປູກຢາງພາລາໃນ 6 ບ້ານ ການທຳລາຍແຫຼ່ງນ້ຳທີ່ສຳຄັນ ແລະ ສ້າງຄວາມເຊື່ອມໂຊມຕໍ່ ລຳຫ້ວຍ ແລະ ໜອງນ້ຳ ຕ່າງໆເຮັດໃຫ້ນ້ຳແຫ້ງລົງ, ມີສານເຄມີປົນເປື້ອນຢູ່ນຳເຮັດໃຫ້ບໍ່ສາມາດນຳໄປໃຊ້ເຮັດຫຍັງໄດ້ ເລີຍ.

ນອກຈາກນີ້ຍັງບໍ່ທັນໄດ້ມີການສຶກສາເຖິງຄຸ້ມຄ່າທາງດ້ານເສດຖະກິດ ຫຼື ຜົນໄດ້ຮັບຂອງ ລັດຖະບານຈາກການໃຫ້ສຳປະທານທີ່ດິນ. ບໍ່ວ່າຈະເປັນອັດຕາຄ່າສຳປະທານ, ຄວາມເໝາະ ສົມຂອງສະພາບພື້ນທີ່ດິນ ແລະ ລັກສະນະໂຄງການທີ່ຈະໄດ້ກຳໄລ ແລະ ຜົນໄດ້ຮັບໃຫ້ກັບທ້ອງຖິ່ນເປັນຕົ້ນ.

2.5 ການຂາດກົນໄກ(ກົນລະຍຸດ)ໃນການມີສ່ວນຮ່ວມຂອງປະຊາຊົນ

ຂະບວນການໃຫ້ສຳປະທານທີ່ດິນໃນການປູກຢາງພາລາຜ່ານມາ ໄດ້ມີການດຳເນີນໂດຍການຕົກລົງກັນລະຫວ່າງລັດຖະບານສູນກາງ ແລະ ຜູ້ປົກຄອງໃນລະດັບແຂວງ ກັບບໍລິສັດຜູ້ຮັບການສຳປະທານ, ເຊິ່ງປະຊາຊົນບໍ່ມີສ່ວນຮ່ວມໃນການຕັດສິນໃຈຫຍັງໝົດ. ນັບຕັ້ງແຕ່ການຕັດສິນໃຈເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມໃນໂຄງການໃນການຄັດເລືອກ ແລະ ຈັດຫາດິນ. ການກຳນົດ ຄ່າຊົດເຊີຍທີ່ດິນໄປຈົນເຖິງການເຂົ້າຮ່ວມເປັນຄົນງານໃນນິຄົມກະສິກຳຢາງພາລາ. ຈາກການ ສຶກສາເຫັນວ່າໃນໄລຍະທີ່ນະໂຍບາຍ ແລະ ກົດໝາຍບໍ່ໄດ້ລະບຸເຖິງເລື່ອງການສ້າງໃຫ້ມີສ່ວນ ຮ່ວມຂອງປະຊາຊົນກ່ຽວກັບໂຄງການສຳປະທານທີ່ດິນໄວ້, ເຊິ່ງເຫັນຄວາມສຳຄັນໃນເລື່ອງດັ່ງກ່າວ ເປັນການພິຈາລະນາ ສະເພາະຕົນຂອງເຈົ້າໜ້າທີ່ປະຕິບັດງານໃນລະດັບພື້ນທີ່ໃນບ້ານ ທີ່ເຈົ້າ ໜ້າທີ່ໃນລະດັບແຂວງ ແລະ ເມືອງໃຫ້ເວລາ ແລະ ຄວາມສຳຄັນກັບການສ້າງໃຫ້ມີສ່ວນຮ່ວມ ກັບປະຊາຊົນໃນບາງລະດັບເຊັ່ນ: ໃນແຂວງສາລະວັນ ມີຜົນຊ່ວຍຫຼຸດຜ່ອນຄວາມຂັດແຍ່ງຂອງ ບັນຫາການສູນເສຍທີ່ດິນທຳມາຫາກິນຂອງປະຊາຊົນລົງ, ພ້ອມທັງຊ່ວຍໃຫ້ປະຊາຊົນໄດ້ຮັບຄ່າ ຊົດເຊີຍຢ່າງເຕັມເມັດເຕັມໜ່ວຍຂຶ້ນ. ແຕ່ໃນບ້ານທີ່ເຈົ້າໜ້າທີ່ໃນລະດັບແຂວງ ແລະ ເມືອງ ບໍ່ໃຫ້ປະຊາຊົນມີສ່ວນຮ່ວມໃນການຈັດຫາດິນ

ໃຫ້ກັບບໍລິສັດຜູ້ສຳປະທານ ຜົນກະທົບຈາກການສູນເສຍທີ່ດິນໃນໝູ່ປະຊາຊົນຈະມີຫຼາຍ ແລະ ຈະເຮັດໃຫ້ການຂັດແຍ່ງຈະຮຸນແຮງກ່ວາ.

2.6 <u>ຂາດການກວດສອບ, ຕິດຕາມ ແລະ ປະເມີນຜົນ</u>

ເຖິງວ່າໂຄງການສຳປະທານທີ່ດິນຂະໜາດໃຫຍ່ຈະດຳເນີນການໄປຢ່າງກ້ວາງຂວາງໃນທົ່ວທຸກພາກຂອງ ສປປ ລາວ ມາຈົນເຖິງປະຈຸບັນ, ແຕ່ກໍ່ຍັງບໍ່ມີຂໍ້ກຳນົດທີ່ແນ່ນອນເຖິງແນວທາງ ຂອງໜ່ວຍງານ ແລະ ຂະບວນການທີ່ຈະເຮັດໜ້າທີ່, ໃນການຕິດຕາມກວດສອບໃຫ້ໂຄງການຕ່າງໆ ຂອງບໍລິສັດທີ່ໄດ້ຮັບສຳປະທານວ່າໄດ້ດຳເນີນໄປຕາມທີ່ສະເໜີໄວ້ໃນສັນຍາ ຕະຫຼອດຈົນບໍ່ສາມາດລ່ວງລະເມີດສັນຍາທີ່ເຮັດໄວ້ບໍ່ວ່າຈະເປັນເລື້ອງພື້ນທີ່ການເຮັດສຳປະທານ, ການວ່າຈ້າງ ປະຊາຊົນເປັນແຮງງານ, ການກຳນົດຄ່າແຮງໃຫ້ເປັນໄປຕາມກົດໝາຍທີ່ກຳນົດໄວ້ ແລະ ຖ້າຫາກວ່າບໍລິສັດມີການເຮັດຜິດກໍ່ເຫັນໄດ້ວ່າໃຫ້ມີຄວາມແນ່ນອນໃນການລົງໂທດໃນທາງໃດໜຶ່ງ.

## 3. ການສຳປະທານທີ່ດິນຂະໜາດໃຫຍ່ເພື່ອປູກຢາງພາລາເຊິ່ງສ້າງຜົນກະທົບໃນດ້ານລົບຕໍ່ຊຸມຊົນຫຼາຍກ່ວາຜົນໄດ້ຮັບທາງດ້ານເສດຖະກິດ.

ການໃຫ້ສຳປະທານທີ່ດິນເພື່ອປູກຢາງພາລາ ໃນພື້ນທີ່ຂະໜາດໃຫຍ່ພາຍໃຕ້ຂະບວນການທີ່ຂາດກົດເກນທີ່ເປັນມາດຖານອັນໂປ່ງໃສ ຫຼືຄວບຄຸມບໍ່ໄດ້, ຂາດມາດຕາຖານຂໍ້ມູນຮອງຮັບ ແລະ ປັດສະຈາກການທີ່ບໍ່ມີສ່ວນຮ່ວມ ຂອງປະຊາຊົນ. ແມ່ນໄດ້ເຮັດໃຫ້ເກີດຜົນກະທົບທີ່ຮ້າຍແຮງ ຕໍ່ແນວທາງການດຳລົງຊີວິດ ຂອງປະຊາຊົນ.ໃນພື້ນທີ່ໂຄງການໂດຍຫຼີກລ້ຽງບໍ່ໄດ້. ການເຂົ້າເປັນ ແຮງງານຮັບຈ້າງ ໃນສວນຢາງພາລາ ຂອງຊາວບ້ານເກີດຂຶ້ນເພາະບໍ່ມີທາງເລືອກອື່ນ. ເນື່ອງຈາກວ່າການໃຊ້ຊີວິດໄດ້ຮັບຜົນກະທົບໃນດ້ານຕ່າງໆດັ່ງນີ້:

<u>3.1. ການສູນເສຍທີ່ດິນ ແລະ ສິດທິການນຳໃຊ້ທີ່ດິນເພື່ອເຮັດການຜະລິດຂອງຕົນເອງ</u>

ມີຄຳເວົ້າທີ່ວ່າທີ່ດິນທີ່ອະນຸມັດໃຫ້ບໍລິສັດສຳປະທານປູກຢາງພາລາໄປແລ້ວນັ້ນ ເປັນທີ່ດິນ ຮົກເຮື້ອຫວ່າງເປົ່າ ແລະ ບໍ່ມີການເຮັດປະໂຫຍດຫຍັງ. ໃນການສຶກສາເຫັນວ່າໃນຄອບຄົວ 90% ຕ່າງກໍ່ມີໃບຮັບຮອງສິດໃນທີ່ດິນເພື່ອເຮັດກະສິກຳແບບຊົ່ວຄາວ ນັບຕັ້ງແຕ່ມີການມອບດິນມອບປ່າໃນປີ 1990 ແລະ ມີປະມານ80%ຂອງພື້ນທີ່ທຳມາຫາກິນທີ່ຖືກມອບໃຫ້ບໍລິສັດຢາງພາລາ ເປັນພື້ນທີ່ທີ່ມີການນຳໃຊ້ປະໂຫຍດ, ທີ່ມີໃບຮັບຮອງສິດນຳໃຊ້ທີ່ດິນຊົ່ວຄາວ. ການໃຫ້ສຳປະທານ ທີ່ດິນຂອງບໍລິດສັດເອກະຊົນ ໂດຍບໍ່ມີການສຳຫຼວດສະພາບສິດການນຳໃຊ້ທີ່ດິນ ຂອງປະຊາຊົນທີ່ມີຢູ່ໃຫ້ແນ່ນອນກ່ອນເກີດມີການຕັດສິດຂອງປະຊາ ຊົນ. ປະຊາຊົນບໍ່ໄດ້ຮັບສິດຖາວອນໃນທີ່ ດິນຕາມຂະບວນການ 8 ຂັ້ນຕອນຂອງການມອບດິນມອບປ່າ. ນອກນີ້ແລ້ວການສຶກສາຍັງເຫັນວ່າ ບາງຄອບຄົວທີ່ໄດ້ຮັບ

ສິດຖາວອນມີໃບຕາດິນແລ້ວກໍ່ຍັງຕ້ອງໄດ້ມອບທີ່ດິນໃຫ້ກັບບໍລິສັດ. ການສູນເສຍສິດທິໃນການນໍາໃຊ້ທີ່ດິນທໍາມາຫາກິນດັ່ງກ່າວແມ່ນໄດ້ທໍາລາຍຫຼັກປະກັນຄວາມໝັ້ນຄົງ ໃນຊີວິດຂອງປະຊາຊົນລົງ ແລະ ຊຸກຍູ້ໃຫ້ປະຊາຊົນຈໍານວນຫຼາຍຮ້ອຍຄົວເຮືອນຕ້ອງເປັນ ແຮງງານຮັບຈ້າງທີ່ບໍ່ມີຊັບພະຍາກອນໃນການດໍາລົງຊີວິດ.

### 3.2.ການຂາດເຂົ້າ ແລະ ການສູນເສຍລາຍຮັບຈາກພືດເສດຖະກິດ

ການປ່ຽນແປງທີ່ດິນໃນການຫາຢູ່ຫາກິນເຊິ່ງແຕ່ເກົ່າແມ່ນເປັນນາ ແລະ ສວນພືດເສດຖະກິດຊະນິດຕ່າງໆເຊັ່ນ: ກາເຟ, ຖົ່ວລຽນ, ໝາກແໜ່ງ ແລະ ໝາກໄມ້ຕ່າງໆ ແມ່ນໄດ້ກາຍເປັນ ສວນຢາງພາລາໄປແລ້ວ ເຮັດໃຫ້ເກີດການຂາດແຄນເຂົ້າຢ່າງຫຼວງຫຼາຍ ແລະ ເສຍລາຍຮັບ ຈາກການຂາຍຜົນຜະລິດທາງດ້ານການກະສິກໍາ ທີ່ເຄີຍເປັນລາຍຮັບຫຼັກຂອງຊາວບ້ານ. ໃນກໍລະນີ ທີ່ໄດ້ສຶກສາ 6 ບ້ານ ເຫັນໄດ້ວ່າ ຄອບຄົວທີ່ເຄີຍຜະລິດເຂົ້າໄດ້ພໍກິນຕະຫຼອດປີ ໄດ້ມີການຫຼຸດລົງຢູ່ 45% ໃນປີ 2003 ແລະ 9% ໃນປີ 2007 ໂດຍຜົນຜະລິດເຂົ້າໄດ້ຫລຸດລົງເຫຼືອພຽງແຕ່ 1 ໃນ 4 ຈາກທີ່ເຄີຍຜະລິດ ເທົ່ານັ້ນ. ນອກຈາກນີ້ແລ້ວລາຍໄດ້ຈາກການຂາຍເຂົ້າ ແລະພືດເສດຖະກິດຕ່າງໆກໍ່ຫຼຸດຈໍານວນລົງ. ການສູນເສຍແຫຼ່ງລາຍໄດ້ສໍາຄັນ ແລະ ເກີດວິກິດການຂາດເຂົ້າເຮັດໃຫ້ ຕົ້ນທຶນຄ່າໃຊ້ຈ່າຍໃນການດໍາລົງຊີວິດສູງຂຶ້ນກ່ວາແຕ່ກ່ອນຫຼາຍຂຶ້ນເທົ່າຕົວ. ໃນບາງຄອບຄົວທີ່ບໍ່ມີທີ່ດິນທໍາການຜະລິດກໍມີຄ່າໃຊ້ຈ່າຍໃນການຊື້ເຂົ້າສູງເຖິງ 5,900,000 ກີບຕໍ່ປີ.

### 3.3 ການເຊື່ອມໂຊມຂອງແຫຼ່ງຊັບພະຍາກອນທໍາມະຊາດ

ໃນບ້ານທີ່ຂະບວນການຈັດຫາທີ່ດິນໃຫ້ກັບບໍລິສັດປູກຢາງພາລາຢ່າງຟ້າວຟັ່ງເຊັ່ນ: ບ້ານວັງຄະນານ, ບ້ານອຸດົມສຸກ ເຫັນວ່າປ່າໄມ້ທໍາມະຊາດ ທີ່ເຄີຍໃຊ້ສອຍທີ່ເປັນແຫຼ່ງເຄື່ອງປ່າຂອງດົງ ແລະ ອາຫານທໍາມະຊາດ ມີຈໍານວນຫຼວງຫຼາຍ ແລະ ສໍາຄັນແມ່ນໄດ້ຖືກທໍາລາຍໄປຈົນໝົດ, ນອກຈາກນີ້ອາຫານທີ່ມາຈາກແຫຼ່ງນໍ້າທໍາມະຊາດເຊັ່ນ: ລໍາຫ້ວຍ ແລະ ໜອງຕ່າງໆ ກໍ່ຫຼຸດຈໍານວນລົງເນື່ອງຈາກສານເຄມີທີ່ໃຊ້ໃນສວນຢາງພາລາທີ່ໄຫຼມາ.

## 4. ຄວາມສາມາດໃນການຟື້ນຕົວທາງດ້ານເສດຖະກິດຂອງຊຸມຊົນ ພາຍຫຼັງການສູນເສຍທີ່ດິນໃຫ້ກັບບໍລິສັດເອກະຊົນ ຊຶ່ງໄດ້ຈ້າງຄ່າຊົດເຊີຍບໍ່ສົມເຫດສົມຜົນ ແລະ ຄ່າຈ້າງແຮງງານຕໍ່າ.

ເຖິງວ່າຄ່າຊົດເຊີຍຈະຖືເປັນປັດໃຈສໍາຄັນທີ່ຈະສາມາດຊ່ວຍບັນເທົາບັນຫາຄວາມທຸກຍາກຈາກການສູນເສຍທີ່ດິນບ່ອນທໍາການຜະລິດ ແລະ ແຫຼ່ງລາຍໄດ້ຈາກຊັບພະ ຍາກອນທໍາມະຊາດໄດ້. ແຕ່ໃນກໍລະນີທີ່ໄດ້ສຶກສາ 6 ບ້ານນັ້ນເຫັນວ່າການຈ່າຍຄ່າຊົດເຊີຍແມ່ນຂາດຫຼັກການ ແລະ

ເຫດ ຜົນບໍ່ມີມາດຖານທີ່ແນ່ນອນ. ບາງບໍລິສັດຈ່າຍຄ່າຊົດເຊີຍໃຫ້ສະເພາະຜົນຜະລິດທີ່ເສຍຫາຍ, ບາງບໍລິສັດຄິດໄລ່ຈາກເນື້ອທີ່ດິນ ແລະ ຜົນຜະລິດຮ່ວມກັນ, ບາງບໍລິສັດກໍ່ຈ່າຍຄ່າເສຍຫາຍ ຕໍ່ເຮັກຕາໃນອັດຕາທີ່ຕ່ຳກ່ວາຄວາມເປັນຈິງ ແລະ ອັດຕາຄ່າຊົດເຊີຍຈະສູງ ຫຼື ຕ່ຳ ຂື້ນກັບ ຄວາມສາມາດໃນການເຈລະຈາຕໍ່ລອງລະຫວ່າງຊາວບ້ານກັບບໍລິສັດ ໂດຍບໍ່ມີກົດໝາຍຄຸ້ມຄອງ ເຖິງວ່າໃນກໍລະນີທີ່ພະນັກງານລະດັບເມືອງໄດ້ມີການສະເໜີອັດຕາຄ່າຊົດເຊີຍ ໃຫ້ກັບບໍລິສັດພິຈາລະນາ ແຕ່ໃນການດຳເນີນການໂດຍທົ່ວໄປແລ້ວ ໜ່ວຍງານຂອງລັດບໍ່ສາມາດເຂົ້າມາເຮັດໜ້າທີ່ໃຫ້ ຄວາມຊ່ວຍເຫຼືອເພື່ອສ້າງຫຼັກປະກັນບໍ່ໃຫ້ປະຊາຊົນຖືກເອົາປຽບຈາກບໍລິສັດ ໂດຍສະເລ່ຍແລ້ວ ຄ່າຊົດເຊີຍຈະຢູ່ລະຫວ່າງ 1-2 ລ້ານ ກີບ/1ເຮັກຕາ ຊຶ່ງຕ່ຳກ່ວາມູນຄ່າທີ່ແທ້ຈິງ ຂອງທີ່ດິນທີ່ໃຫ້ຜົນ ຜະລິດທາງເສດຖະກິດໃຫ້ແກ່ປະຊາຊົນໃນແຕ່ລະປີຫຼາຍເທົ່າຕົວ. ຄ່າຊົດເຊີຍທີ່ຕ່ຳເກີນ ໄປດັ່ງ ກ່າວສ້າງຄວາມຫຍຸ້ງຍາກຕໍ່ຊາວບ້ານ. ຜູ້ສູນເສຍທີ່ດິນ ບໍ່ສາມາດຟື້ນຕົວເພາະຂາດຊັບ ໃນການ ດຳລົງອາຊີບ ຫຼື ສາມາດນຳໄປ ລົງທຶນໃນການ ປະກອບຊີບ ໃໝ່ໆໄດ້.

ນອກຈາກນີ້ແລ້ວ ການຈ້າງງານຂອງບໍລິສັດ ໃນຕະຫຼອດຊ່ວງ 3-4 ປີ ຜ່ານມາກໍ່ເກີດມີຄວາມບໍ່ສະໝ່ຳສະເໝີ ແລະ ບໍ່ແນ່ນອນ, ການຈ້າງງານໄດ້ຢ່າງ ເຕັມເມັດເຕັມໜ່ວຍ ພຽງແຕ່ໃນປີທຳອິດທີ່ມີການຈັດຕັ້ງສວນຢາງພາລາໃໝ່ເທົ່ານັ້ນ, ແຕ່ປີຕໍ່ມາການຈ້າງງານໄດ້ຫຼຸດລົງເກີນກ່ວາເຄິ່ງໜຶ່ງ ແລະ ການຈ້າງງານກໍ່ບໍ່ມີປະຈຳ, ຕະຫຼອດຈົນຮອດປີ ທີ່ເຮັດໃຫ້ ຊາວບ້ານຈຳນວນຫຼາຍບໍ່ມີວຽກ ແລະ ທຸກຍາກລຳບາກ. ພ້ອມນີ້ຍັງມີກຳມະກອນທີ່ເຮັດປະຈຳ ກໍ່ໄດ້ຮັບເງິນເດືອນບໍ່ສະໝ່ຳສະເໝີໂດຍອັດຕາເງິນເດືອນກໍ່ຫຼຸດລົງຫຼາຍກ່ວາປີທຳອິດ, ການຈ້າງແຮງງານຈາກໝູ່ບ້ານຫຼຸດລົງ ແຕ່ວ່າບໍລິສັດຊ້ຳພັດເອົາແຮງງານຄົນຕ່າງປະເທດມາເຮັດວຽກຕ່າງໆແທນທີ່ຄົນລາວ. ປະຈຸບັນຈຳນວນແຮງງານຕ່າງຊາດທີ່ມີຢູ່ນັ້ນມີຈຳນວນສູງກ່ວາ ທີ່ຈຳກັດໄວ້ຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດໃນປີ 2004. ທີ່ລະບຸໄວ້ວ່າບໍ່ໃຫ້ມີການຈ້າງແຮງງານຕ່າງຊາດເກີນກ່ວາ 10%. ປະຈຸບັນຍັງບໍ່ມີໜ່ວຍງານພາກລັດ ຫຼື ກົດໝາຍແຮງງານທີ່ຈະສາມາດຊ່ວຍຄຸ້ມຄອງການຈ້າງງານ ແລະ ຄ່າຈ້າງ ແຮງງານໃຫ້ແກ່ຊາວບ້ານ ດັ່ງນັ້ນການຈ້າງແຮງງານ ຈຶ່ງເປັນໄປຕາມບໍລິສັດໄດ້ຕັ້ງໄວ້ເທົ່ານັ້ນ.

ຖ້າຂາດກົດໝາຍຄຸ້ມຄອງຊາວບ້ານກໍ່ບໍ່ໄດ້ຮັບຄ່າຊົດເຊີຍທີ່ເໝາະສົມ ແລະ ການຄຸ້ມຄອງໃນການຈ້າງແຮງງານ, ຖ້າບໍ່ຖືກຕ້ອງກໍ່ຈະເຮັດໃຫ້ປະຊາຊົນຊາວບ້ານ ທີ່ສູນເສຍດິນທຳມາຫາກິນໃຫ້ບໍລິສັດຕ້ອງຕົກຢູ່ໃນສະພາບທີ່ທຸກຍາກລຳບາກ ໂດຍປັດສະຈາກມາດຕາການ ຫຼື ທ່າແຮງໃດໜຶ່ງເຮັດໜ້າທີ່ເປັນໃຈກາງໃນການຊ່ວຍເພື່ອຮຽກຮ້ອງຄວາມຖືກຕ້ອງໃຫ້ແກ່ປະຊາຊົນ.

## 5. ຄວາມສາມາດໃນການປັບຕົວ ແລະ ຟື້ນຟູທາງເສດຖະກິດຂອງຂອງຊາວບ້ານທີ່ຖືກຜົນກະທົບຈາກການສຳປະທານທີ່ດິນ ແລະ ແຮງງານທີ່ມີຢູ່ໃນຄອບຄົວ

ພາຍໃຕ້ການຈ້າງແຮງງານທີ່ບໍ່ຖືກຕ້ອງ ແລະ ບໍ່ສະໝໍ່າສະເໝີຕໍ່ຊາວບ້ານທີ່ໄດ້ສູນ ເສຍທີ່ດິນໃຫ້ກັບບໍລິສັດ. ພວກເຂົາເຈົ້າຈໍາເປັນຕ້ອງສະແຫວງຫາທາງເລືອກອື່ນໃນການດໍາລົງຊີວິດ. ຈາກການສຶກສາເຫັນວ່າໃນກຸ່ມຊາວບ້ານທີ່ມີນາເຫຼືອຢູ່ເຊັ່ນ ບ້ານໜອງແກ, ບ້ານ ວັງຄະນານ ແລະ ບ້ານໜອງລາວເທິງ ແມ່ນຈະເລືອກເອົາການເຮັດກະສິກໍາເປັນອາຊີບ ຕໍ່ໄປ ຫຼື ຫາຊື້ດິນນາໃນບ້ານອື່ນໆ. ຖ້າມີເວລາຫວ່າງກໍ່ຈະໄປຮັບຈ້າງໃນສວນປູກຢາງພາລາ. ໃນໄລຍະ ທີ່ປະຊາຊົນທີ່ໄດ້ເສຍທີ່ດິນເກືອບໝົດ ເຊິ່ງສ່ວນໃຫຍ່ແມ່ນບ້ານອຸດົມສຸກ, ບ້ານຫຼັກ 19 ແລະ ໜອງນໍ້າຂາວໃຫຍ່ ເຊິ່ງເປັນກຸ່ມບ້ານທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ແລະ ຈໍາເປັນຕ້ອງໄດ້ເຂົ້າ ໄປເຮັດວຽກຢູ່ໃນສວນຢາງພາລາ ຫຼື ໄປຫາຮັບຈ້າງຢູ່ບ່ອນອື່ນທີ່ໃຫ້ຄ່າຈ້າງສູງກ່ວາ. ນອກຈາກ ນີ້ໃນໄລຍະທໍາອິດທີ່ມີການສໍາປະທານເຂົ້າມາ, ຊາວບ້ານຍັງພະຍາຍາມທີ່ຈະຫາ ທີນທາງປູກ ເຂົ້າເພື່ອລ້ຽງຊີບໃນຊ່ອງວ່າງແຖວທີ່ປູກຢາງພາລາ, ແຕ່ການປູກເຂົ້າດັ່ງກ່າວ ແມ່ນ ບໍ່ສາມາດ ປູກໄດ້ອີກຕໍ່ໄປຖ້າຕົ້ນຢາງພາລາໃຫຍ່ຂຶ້ນ.

ປະຈຸບັນຄອບຄົວທີ່ຈະສາມາດດໍາລົງຊີວິດຢູ່ຕໍ່ໄດ້ກໍ່ຕ້ອງແມ່ນຄອບຄົວທີ່ມີດິນເຫຼືອຢູ່ ຫຼື ຄອບຄົວທີ່ມີແຮງງານຈໍານວນຫຼາຍທີ່ຍັງສາມາດຫາລາຍຮັບ ເພື່ອບັນເທົາລາຍຈ່າຍໃນຄອບ ຄົວ. ແຕ່ຍັງມີຄົວເຮືອນທີ່ບໍ່ມີແຮງງານ, ບໍ່ມີດິນຈໍານວນຫຼາຍເຊິ່ງໃນປະຈຸບັນທາງບໍລິສັດ ຫຼື ທາງພາກລັດ ກໍ່ຍັງບໍ່ທັນມີມາດຕາການໃດທີ່ຈະເຂົ້າມາຊ່ວຍ ບັນຫາທາງດ້ານເສດຖະກິດໃຫ້ ແກ່ປະຊາຊົນຜູ້ທຸກຍາກ ແລະ ຂາດດິນເພື່ອເຮັດກະສິກໍາ.

ເນື່ອງຈາກໄລຍະເວລາຂອງການສຶກສາຄົ້ນຄ້ວາໃນຊ່ວງການບຸກເບີກ ແລະ ປູກຢາງພາລາ ຈຶ່ງບໍ່ສາມາດປະເມີນຜົນປະໂຫຍດ ຫຼື ເສດຖະກິດທີ່ໄດ້ຮັບຈາກໂຄງການສໍາປະທານທີ່ດິນປູກຢາງພາລາໄດ້ໃນຂະນະນີ້ ທັງນີ້ ຕົ້ນຢາງພາລາຈະສາມາດກີດນໍ້າຢາງໄດ້ໃນປີທີ 7 ແລະ ໃນຊ່ວງປີທີ 1-6 ບໍລິສັດຍັງໄດ້ຮັບການຍົກເວັ້ນການຈ່າຍຄ່າສໍາປະທານທີ່ດິນ ນອກຈາກນັ້ນ ຄະນະຜູ້ຄົ້ນຄ້ວາຍັງບໍ່ສາມາດເຂົ້າເຖິງເອກະສານທີ່ສໍາຄັນຢ່າງຄົບຖ້ວນ ເຊັ່ນ: ບົດວິພາກທາງເສດຖະກິດກໍ່ໄດ້ມາພຽງບໍລິສັດດຽວ ລວມເຖິງຂໍ້ມູນການຈ້າງແຮງງານຂອງບໍລິສັດ ກໍ່ບໍ່ສາມາດຂໍເອກະສານຂໍ້ມູນຈາກບໍລິສັດໄດ້ ເຫດນີ້ເອງ ຂໍ້ມູນຈາກງານສຶກສາພາກສະໜາມສ່ວນໃຫຍ່ຈຶ່ງເປັນຂໍ້ມູນມາຈາກການສໍາພາດປະຊາຊົນເທົ່ານັ້ນ ດ້ວຍຂໍ້ຈໍາກັດດັ່ງກ່າວ ງານສຶກສາຈຶ່ງບໍ່ອາດປະເມີນຜົນທາງເສດຖະກິດອອກມາໄດ້ ແນວໃດກໍ່ຕາມ ຄະນະຜູ້ຄົ້ນຄ້ວາເຫັນວ່າ ໃນອະນາຄົດອາດຈະມີງານສຶກສາເພີ່ມເຕີມໃນໄລຍະທີ່ຢາງພາລາສາມາດກີດຢາງໄດ້

## ຂໍ້ແນະນໍາ

ໂຄງການຄົ້ນຄ້ວາເຫັນໄດ້ວ່າ ການສະໜັບສະໜູນທາງດ້ານການພັດທະນາທີ່ດິນ ເພື່ອເຮັດການກະສິກຳການຄ້າໃນອານາຄົດນັ້ນ. ຄວນມີການປ່ຽນແປງທິດທາງທີ່ເນັ້ນໃສ່ການສ້າງປະໂຫຍດໂດຍກົງຕໍ່ຊຸມຊົນຊາວກະສິກອນ ຫຼາຍກ່ວາການຈັດສັນທີ່ດິນຂະໜາດໃຫຍ່ໃຫ້ ກັບບໍລິສັດເອກະຊົນ. ຜົນຈາກການສຶກສາໄດ້ຊີ້ໃຫ້ເຫັນ ເຖິງບັນຫາຫຼາຍຢ່າງ ທີ່ເກີດຈາກການໃຫ້ສຳປະທານທີ່ດິນຂະໜາດໃຫຍ່. ຜົນສຸດທ້າຍແລ້ວ ກໍ່ເຫັນໄດ້ວ່າການປ່ຽນ ແປງທາງດ້ານເສດຖະກິດກໍ່ບໍ່ໄດ້ເຮັດໃຫ້ເກີດຜົນປະໂຫຍດຫຍັງຕໍ່ປະຊາຊົນໃນທ້ອງຖິ່ນ. ໃນ ການແກ້ໄຂບັນຫາທີ່ເກີດຈາກຊຸມຊົນທີ່ໄດ້ເສຍທີ່ດິນໃຫ້ກັບບໍລິສັດ ແລະ ປ່ຽນແປງທິດທາງໃນການຈັດສັນທີ່ດິນໃນ ສປປ ລາວ, ໂຄງການຄົ້ນຄ້ວາວິໄຈ ຂໍສະເໜີມາດຕະການຕ່າງໆດັ່ງຕໍ່ໄປນີ້:

✸ມາດຕາການໄລຍະສັ້ນ

1. ການບັນເທົາຄວາມທຸກຍາກຂອງປະຊາຊົນທີ່ສູນເສຍທີ່ດິນ

1.1 ຄວນຈັດຕັ້ງກອງທຶນເຂົ້າໃນຊຸມຊົນທີ່ສູນເສຍທີ່ດິນຈຳນວນຫຼາຍ ແລະ ປະສົບກັບພາວະຂາດເຂົ້າຢ່າງຮຸນແຮງ.

1.2 ກວດສອບເລື່ອງການຊົດເຊີຍ ແລະດຳເນີນການໃຫ້ປະຊາຊົນ, ໄດ້ຮັບຄ່າຊົດເຊີຍທີ່ເໝາະສົມ.

1.3 ຈັດຫາທີ່ດິນຄືນໃຫ້ປະຊາຊົນ ທີ່ສູນເສຍທີ່ດິນທັງໝົດເຊັ່ນວ່າ: ເນື້ອທີ່ດິນ 1 ເຮັກຕາ / 1 ຄອບຄົວ ເພື່ອໃຊ້ໃນການປູກເຂົ້າ ຫຼື ພືດກະສິກຳ.

1.4ຕ້ອງໄດ້ເຂົ້າໄປເບິ່ງແຍງເລື່ອງອັດຕາຄ່າຈ້າງແຮງງານໃຫ້ເໝາະສົມພຽງພໍຕໍ່ການລ້ຽງຊີບຂອງປະຊາຊົນ ແລະ ຄວນເຮັດສັນຍາການວ່າຈ້າງແຮງງານເປັນລາຍ ຫຼັກ ອັກສອນ.

✸ມາດຕາການໄລຍະກາງ

1. ຈັດຕັ້ງຄະນະກຳມະການເພື່ອຕິດຕາມກວດສອບ, ການດຳເນີນການເຮັດສຳປະ ທານທີ່ດິນໂດຍຄະນະກຳມະການດັ່ງກ່າວຄວນມີອຳນາດ ແລະ ໜ້າທີ່ດັ່ງນີ້:

1.1 ຕິດຕາມການດຳເນີນການຂອງບໍລິສັດປູກຢາງພາລາໃນເລື່ອງຂອງທີ່ດິນ ແລະ ການໃຊ້ປະໂຫຍດຂອງທີ່ດິນ ເຊັ່ນວ່າເນື້ອທີ່ດິນ

1.2 ອົງການ ຄຸ້ມຄອງທີ່ດິນທ້ອງຖິ່ນ ຕ້ອງປະສານກັບອົງການດ້ານແຮງງານເພື່ອຄວບຄຸມກຳກັບໃຫ້ລະບົບການຈ້າງງານໃຫ້ມີຄວາມເປັນທຳ ໃຫ້ຊາວບ້ານໄດ້ຮັບ ການຈ້າງງານ ຢ່າງສະໝ່ຳສະເໝີ. ພ້ອມທັງໃຫ້ມີລະບົບສະຫວັດດີການ ໃຫ້ແຮງງານ.

1.3 ປະສານງານກັບອົງການຈັດຕັ້ງອື່ນໆ ເພື່ອຈັດຫາອາຊີບທາງເລືອກອື່ນໆ. ດຳເນີນການຊ່ວຍເຫຼືອ ແລະ ຫຼຸດຜ່ອນຄວາມທຸກຍາກໃຫ້ແກ່ປະຊາຊົນ, ທີ່ໄດ້ຮັບ ຜົນກະທົບຈາກການສູນເສຍທີ່ດິນ ແລະ ຄ່າຈ້າງງານທີ່ບໍ່ພຽງພໍຕໍ່ການລ້ຽງຊີບ.

1.4 ຄວນມີການສຳຫຼວດທີ່ດິນ ແລະ ຈັດແບ່ງປະເພດທີ່ດິນ ໃນແຕ່ລະແຂວງ ແລະຈັດການປ້ອງກັນທີ່ດິນທີ່ມີການນຳໃຊ້ໃຫ້ເກີດຜົນຢ່າງແທ້ຈິງໃຫ້ແກ່ປະຊາຊົນ ທີ່ໄດ້ມີການມອບສິດ ຕາມນະໂຍບາຍການມອບດິນມອບປ່າອອກຈາກພື້ນທີ່ສຳປະທານ.

1.5ປະຕິຮູບກົນໄກໃນການອານຸມັດການສຳປະທານທີ່ດິນເພື່ອຫລຸດຜ່ອນບັນຫາເກົ່າທີ່ເກີດຂຶ້ນໃນຂະບວນການໃຫ້ສຳປະທານ

<u>✸ມາດຕາການໄລຍະຍາວ.</u>

1. ການຕັດສິນບັນຫາ ການໃຫ້ສຳປະທານທີ່ດິນ, ເປັນບໍລິເວນກ້ວາງ ແລະໄລຍະຍາວນານ,ຄວນອີງໃສ່ບັນດາກົດໝາຍ ແລະ ນິຕິກຳທີ່ມີການພົວພັນ ເຖິງທີ່ດິນ, ປ່າໄມ້ ແລະລະບຽບການຂອງການລົງທຶນ.

1.1 ຄວນຍົກເລີກແນວທາງ ການໃຫ້ສຳປະທານທີ່ດິນຂະໜາດໃຫຍ່, ໃນການປູກພືດເສດຖະກິດ ໃຫ້ກັບນັກລົງທຶນຕ່າງຊາດໃນໄລຍະຍາວ.

1.2 ນະໂຍບາຍກ່ຽວກັບການຈັດສັນທີ່ດິນ, ຄວນເນັ້ນໜັກການສ້າງເສີມທ່າແຮງ ຂອງປະຊາຊົນໃນການພັດທະນາ, ການໃຊ້ປະໂຫຍດຈາກທີ່ດິນເພື່ອເພີ້ມມູນຄ່າທາງເສດຖະກິດ, ໂດຍສິດໃນການໃຊ້ປະ ໂຫຍດ ຍັງເປັນຂອງປະຊາຊົນ.

1.3 ຄວນມີການວາງແຜນການຈັດສັນທີ່ດິນທີ່ຕ້ອງນຶກເຖິງຄວາມສົມດຸນ ຂອງຜົນໄດ້ຮັບຕ່າງໆຢ່າງ ສະໝ່ຳສະເໝີກັນບໍ່ວ້າຈະເປັນເສດຖະກິດຂອງຊາດ, ເສດຖະກິດຂອງທ້ອງຖິ່ນ, ການກະຈາຍລາຍຮັບ, ຜົນປະໂຫຍດດ້ານນິເວດວິທະຍາ ແລະຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ.

1.4 ຖ້າຈະມີການໃຫ້ສຳປະທານທີ່ດິນຕໍ່ໄປ ຄວນເປັນຂະໜາດນ້ອຍໃນພື້ນ ທີ່ທີ່ບໍ່ໄດ້ໃຊ້ປະໂຫຍດ ຫຍັງ ແລະຕ້ອງມີການປະເມີນຜົນກະທົບ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມກ່ອນຈະມີການອານຸມັດໂຄງການ.

## ລາຍຊື່ຜູ້ເຂົ້າຮ່ວມໂຄງການຄົ້ນຄ້ວາ

### ✹ ທີ່ປຶກສາໂຄງການຄົ້ນຄ້ວາຂັ້ນສູນກາງ:

1. ທ່ານ ຈັນທະວີພອນ ອິນທະວົງ ຮັກສາການ ຫົວໜ້າ ສູນຄົ້ນຄ້ວາ ແລະຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

### ✹ ຄະນະຊີ້ນຳໂຄງການຄົ້ນຄ້ວາຂັ້ນສູນກາງ:

1. ທ່ານ ດຣ ບຸນເກື້ອ ວົງສາລາດ ຮອງຫົວໜ້າ ສູນຄົ້ນຄ້ວາ ແລະຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ.
2. ທ່ານ ບຸນຍົງ ປະທຳມະວົງ ຫົວໜ້າ ພະແນກ ຝຶກອົບຮົບ ແລະເຜີຍແຜ່.
3. ທ່ານ ບຸນທະວີ ສິດທິວົງ ຮອງຫົວໜ້າພະແນກຄົ້ນຄ້ວາທີ່ດິນ ແລະຊັບພະຍາກອນທຳມະຊາດ.

### ✹ ຄະນະຊີ້ນຳໂຄງການຄົ້ນຄ້ວາຂັ້ນແຂວງ:

1. ທ່ານ ສົມໃຈ ອຸ່ນຈິດ ຫົວໜ້າ ອົງການຄຸ້ມຄອງທີ່ດິນ ແຂວງສາລະວັນ
2. ທ່ານ ໜໍ່ຄຳ ອຸ່ນສະຫວັນ ຮອງຫົວໜ້າ ອົງການຄຸ້ມຄອງທີ່ດິນ ແຂວງຈຳປາສັກ

### ✹ ຄະນະຄົ້ນຄ້ວາ ຝ່າຍຕ່າງປະເທດ:

1. ທ່ານ ດຣ. ປິ່ນແກ້ວ ເຫຼືອງອາຣ່າມສີ ຄະນະສັງຄົມສາດ ມະຫາວິທະຍາໄລຊຽງໃໝ່/FER
2. ທ່ານ ນ ພອນພະນາ ກ້ວຍຈະເລີນ ມູນນິທິຟື້ນຟູຊີວິດ ແລະ ທຳມະຊາດ/TERRA
3. Ms. Rebeca Leonard ມູນນິທິຟື້ນຟູຊີວິດ ແລະ ທຳມະຊາດ/TERRA

### ✹ ຄະນະວິຊາການຊ່ວຍຄົ້ນຄ້ວາ ຢູ່ພາກສະໜາມ:

| | |
|---|---|
| 1. ທ່ານ ສີນະຄອນ ສຸຂະວົງ | ວິຊາການ ພະແນກຄົ້ນຄ້ວາ ສ ຄ ຂ ດ. |
| 2. ທ່ານ ນ ແສງມະນີ ແກ້ວລະກິດໂພສີ | ວິຊາການ ພະແນກຄົ້ນຄ້ວາ ສ ຄ ຂ ດ. |
| 3. ທ່ານ ລຳພັນ ໄຊຍະລາດ | ວິຊາການ ພະແນກຄົ້ນຄ້ວາ ສ ຄ ຂ ດ |
| 4. ທ່ານ ນ ຈຳປາໄພ ຄຳບົວສີ | ຫ້ອງຂໍ້ມູນຂ່າວສານ ອົງການຄຸ້ມຄອງທີ່ດິນແຂວງຈຳປາສັກ |
| 5. ທ່ານ ສົມດີ ພົມມະເສນ | ຮອງຫົວໜ້າອົງການຄຸ້ມຄອງທີ່ດິນເມືອງບາຈຽງ |
| 6. ທ່ານ ຄຳແສນ ກິດຕິສັກ | ຮອງຫົວໜ້າອົງການຄຸ້ມຄອງທີ່ດິນເມືອງເລົ່າງາມ |
| 7. ທ່ານ ສີສົມພົນ ແກ້ວວິໄລວົງ | ໜ່ວຍງານປົກຄອງເມືອງເລົ່າງາມ |
| 8. ທ່ານ ຄຳຮູ້ ໂດມດາລາ | ກະສິກຳເມືອງເລົ່າງາມ |
| 9. ທ່ານ ໄຊ ໄຊຍະວົງສາ | ວິຊາການເມືອງເລົ່າງາມ |

| | | |
|---|---|---|
| 10 | ທ່ານ ຈັນຫວ່າງ | ຫ້ອງການ ແຮງງານ ແລະ ສະຫວັດດີການສັງຄົມ ເມືອງເລົ່າງາມ |